ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບົດລາຍງານຜົນການດຳເນີນທຸລະກິດ ໄຕມາດ 3

30 ກັນຍາ 2018



ຖະໜົນມິດຕະພາບ ລາວ-ໄທ; ບ້ານທົ່ງກາງ; ເມືອງສີສັດຕະນາກ; ນະຄອນຫລວງວຽງຈັນ; ສປປ ລາວ

ຕູ້ ປ.ນ: 2392; ໂທລະສັບ: (856 21) 316 142;

ໂທລະສານ: (856 21) 316 141 Email: edlgenhq@edlgen.com.la; website: www.edlgen.com.la

ສາລະບານ

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ....2

2. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ:....3

3. ກົງຈັກການຈັດຕັ້ງ.....5

3.1 ໂຄງຮ່າງການຈັດຕັ້ງ.....5

4. ຄະນະກຳມະການຕ່າງໆ.....8

4.1 ຄະນະກຳມະການຂອງສະພາບໍລິຫານ.....8

1. ຄະນະກຳມະການກວດສອບ……..…8

2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ……...8

3. ຄະນະກຳມະການກຳນົດຄ່າຕອບແທນ……...……...…8

4. ຄະນະກຳມະການຄັດເລືອກ……..…8

5. ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ……..……9

4.2. ຄະນະກຳມະການຂອງ ຄະນະອຳນວຍການໃຫຍ່……...8

1. ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້ຂາຍໄຟຟ້າ ……..…..

..8

2. ຄະນະກຳມະການຈັດຊື້ ແລະ ສະໜອງວັດສະດຸອຸປະກອນ (ຄຈຊ)……..…….. 9

3. ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ (ຄນຍວ)...……..9

5. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ.....9

5.1 ການຜະລິດ.....9

5.2 ລາຍຮັບ. 9

5.3 ລາຍຈ່າຍ. 9

5.4 ກຳໄລໃນການດຳເນີນທຸລະກິດ. 10

5.5 ການມອບພັນທະ 10

ເອກະສານລາຍງານການເງິນ

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຖືກສ້າງຕັ້ງຂຶ້ນ ໃນວັນທີ 15 ທັນວາ 2010 ໂດຍ ລັດວິສາຫະກິດ ໄຟຟ້າລາວ (ຟຟລ) ໂອນເອົາບັນດາເຂື່ອນ ແລະ ຊັບສິນທີ່ກ່ຽວຂ້ອງກັບການຜະລິດມາ ໃຫ້ ຜ-ຟຟລ, ຊຶ່ງປະກອບດ້ວຍ: ເຂື່ອນໄຟຟ້ານ້ຳງື່ມ 1, ເຂື່ອນໄຟຟ້ານ້ຳມັງ 3, ເຂື່ອນໄຟຟ້ານ້ຳເລີກ, ເຂື່ອນ ໄຟຟ້າເຊເສັດ 1 ແລະ ເຂື່ອນໄຟຟ້າເຊເສັດ 2, ເຂື່ອນໄຟຟ້າແຊລະບ ແລະ ເຂື່ອນໄຟຟ້ານ້ຳຊອງ, ລວມມີກຳລັງ ຕິດຕັ້ງທັງໝົດ 387 MW; ພ້ອມດ້ວຍພະນັກງານທີ່ປະຈຳຢູ່ເຂື່ອນທັງໝົດ ແລະ ພະນັກງານສຳນັກງານໃຫຍ່ ຈຳນວນໜຶ່ງໃຫ້ແກ່ ຜ-ຟຟລ.

ໃນເບື້ອງຕົ້ນ ຜ-ຟຟລ ມີທຶນຈົດທະບຽນຈຳນວນ 2.605.792.200.000 ກີບ ແລະ ຄິດເປັນຮຸ້ນ 651.448.050 ຮຸ້ນ (ຮຸ້ນລະ 4.000 ກີບ). ຈາກນັ້ນ ບໍລິສັດ ໄດ້ຕົກລົງໃຫ້ມີການເພີ້ມທຶນດ້ວຍການອອກຮຸ້ນ ຄັ້ງທຳອິດ (IPO) ດ້ວຍຈຳນວນຮຸ້ນ 217.149.000 ຮຸ້ນ ໃຫ້ມະຫາຊົນທົ່ວໄປ, ໃນວັນທີ 07 ມັງກອນ 2011 ບໍລິສັດໄດ້ຈົດທະບຽນດ້ວຍທຶນທັງໝົດ 3.474.388.200.000 ກີບ ແລະ ມີຈຳນວນຮຸ້ນທັງໝົດ 868.597.050 ຮຸ້ນ. ໃນວັນທີ 11 ມັງກອນ 2011, ຜ-ຟຟລ ຈຶ່ງໄດ້ຈົດທະບຽນເຂົ້າໃນ ຕະຫລາດຫລັກຊັບ ລາວ ເພື່ອຈຳໜ່າຍຮຸ້ນໃນຕະຫລາດຂັ້ນ II ໃຫ້ນັກລົງທຶນຢ່າງເປັນທາງການ. ຊັດສ່ວນການຖືຮຸ້ນໃນ ຜ-ຟຟລ ຈຶ່ງມີ ຟຟລ 75% ແລະ ອີກ 25% ແມ່ນຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ.

ໃນກາງ ປີ 2012, ຜ-ຟຟລ ໄດ້ອອກຮຸ້ນສາມັນ ແບບສະເໜີຂາຍໃຫ້ຜູ້ຖືຮຸ້ນ ແລະ ແບບສະເໜີຂາຍຕໍ່ ມວນຊົນທົ່ວໄປ ເພື່ອລະດົມທຶນໄປຊື້ເອົາຮຸ້ນໃນ 4 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຟຟລ ຖືຮຸ້ນຢູ່ ຊຶ່ງ ປະກອບມີ:ເຂື່ອນໄຟຟ້າເທີນຫີນບູນ (60%), ເຂື່ອນໄຟຟ້ານ້ຳງື່ມ 2 (25%), ເຂື່ອນໄຟຟ້າຫ້ວຍເຫາະ (20%) ແລະ ເຂື່ອນໄຟຟ້ານ້ຳລີກ 1-2 (10%) ຊຶ່ງມີກຳລັງຕິດຕັ້ງທັງໝົດ 494 MW (ຕາມຊັດສ່ວນການຖືຮຸ້ນ) ເຮັດ ໃຫ້ກຳລັງຕິດຕັ້ງທັງໝົດຂອງ ຜ-ຟຟລ ມີຕົວເລກຢູ່ 881 MW. ດັ່ງນັ້ນໃນທ້າຍປີ 2012 ຜ-ຟຟລ ມີທຶນຈົດ ທະບຽນເປັນເງິນ 4.904.867.060.000 ກີບ ແລະມີຮຸ້ນທັງໝົດ 1.226.216.765 ຮຸ້ນ ຊັດສ່ວນການຖືຮຸ້ນ ຍັງຮັກສາເໝືອນເດີມ.

ໃນເດືອນ ຕຸລາ 2014, ຜ-ຟຟລ ໄດ້ກາຍເປັນ ບໍລິສັດມະຫາຊົນທຳອິດ ໃນ ສປປ ລາວ ທີ່ໄດ້ຮັບການ ຈັດລຳດັບຄວາມໜ້າເຊື່ອຖື ໂດຍ ບໍລິສັດ TRIS Rating ຈຳກັດ ໃນລະດັບ BBB+, ເຊິ່ງຈັດຢູ່ໃນກຸ່ມ Investment Grade ຫຼື ໃນກຸ່ມລະດັບຄວາມສ່ຽງທີ່ເໝາະສົມ ແລະ ລົງທຶນໄດ້.

ໃນວັນທີ 12 ທັນວາ 2014, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ ແລະ ສາມາດລະດົມທຶນໄດ້ 6.500 ລ້ານບາດ. ທຶນຈຳນວນດັ່ງກ່າວນີ້ ແມ່ນຈະຖືກນຳໃຊ້ ເພື່ອຂະຫຍາຍກຳລັງການຜະລິດເພີ່ມຕື່ມ ຈຳນວນ 392 MW, ໃນນັ້ນມີ ໂຄງການຜະລິດໄຟຟ້າຈາກ ຟຟລ ຈຳນວນ 4 ໂຄງການ ລວມກຳລັງຕິດຕັ້ງ 292 MW ແລະ ຊື້ຮຸ້ນທີ່ ຟຟລ ຖືໃນໂຄງການ IPP ອີກ 5 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 100 MW.

ມາຮອດ ວັນທີ 10 ກຸມພາ 2015, ຜ-ຟຟລ ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳງື່ມ 5 (15%) ຕາມ ຊັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 18 MW ເຮັດໃຫ້ມີກຳລັງຕິດຕັ້ງເພີ້ມຂຶ້ນເປັນ 899 MW.

ເພື່ອສືບຕໍ່ໃຫ້ບໍລິສັດເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນ ເດືອນ ກັນຍາ 2015 ຜ-ຟຟລ ໄດ້ອອກ ຮຸ້ນເພີ່ມທຶນຄັ້ງທີ 3, ເຮັດໃຫ້ລະດົມທຶນໄດ້ 2.754 ຕື້ກີບ. ເງິນທຶນທີ່ລະດົມໄດ້ໃນຄັ້ງນີ້ຈະຖືກນຳໃຊ້ເຂົ້າໃນ ການຂະຫຍາຍກຳລັງຕິດຕັ້ງ ຂອງບໍລິສັດ ເພີ່ມຕື່ມຈຳນວນ 386,2 MW, ໃນນັ້ນມີ ໂຄງການຜະລິດໄຟຟ້າທີ່ ຈະຮັບໂອນຈາກ ຟຟລ ຈຳນວນ 5 ໂຄງການ ລວມ 277,9 MW, ການລົງທຶນໃນຮຸ້ນ ຂອງ ຟຟລ ໃນບັນດາ ໂຄງການ IPP ຈຳນວນ 6 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 108,3 MW. ເຮັດໃຫ້ທຶນຈົດ

ທະບຽນເປັນເງິນ 6.717.214.788.000 ກີບ ແລະ ມີຮຸ້ນທັງໝົດ 1.679.303.697 ຮຸ້ນ ຊັດສ່ວນການຖືຮຸ້ນ ຍັງຮັກສາເໝືອນເດີມ.

ໃນວັນທີ 24 ທັນວາ ປີ 2015, ຜ-ຟຟລ ໄດ້ຮັບໂອນ ເຂື່ອນໄຟຟ້ານ້ຳຄານ 2 ກຳລັງຕິດຕັ້ງ 130 MW, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ກຳລັງຕິດຕັ້ງ 88 MW ແລະ ເຂື່ອນໄຟຟ້ານ້ຳສະນາ ກຳລັງຕິດຕັ້ງ 14 MW ເຮັດ ໃຫ້ມີກຳລັງຕິດຕັ້ງທັງໝົດເພີ່ມຂຶ້ນເປັນ 1.131 MW.

ໃນວັນທີ 2 ກັນຍາ 2016, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ເປັນເງິນໂດລາສະຫາລັດທີ່ປະເທດໄທ ທຶນຈຳນວນດັ່ງກ່າວນີ້ ແມ່ນຈະຖືກນຳໃຊ້ໃນ 10 ໂຄງການປະກອບມີ: ໂຄງການແຊລະບຳພາກຂະຫຍາຍ, ໂຄງການເຊເສັດ 2 ພາກຂະຫຍາຍ, ໂຄງການນ້ຳເທີນ 1, ໂຄງການປາກແບ່ງ, ໂຄງການພະລັງງານແສງອາທິດ (Solar), ໂຄງການນ້ຳດີກ 1, ໂຄງການສ້ອມແປງໃຫຍ່ເຂື່ອນໄຟຟ້າເຊເສັດ 1-2, ໂຄງການສ້ອມແປງໃຫຍ່ຈັກ ເບີ 2 ເຂື່ອນໄຟຟ້ານ້ຳມັງ 3, ໂຄງການນ້ຳພູນ (Finance Cost), ແລະ ໂຄງການນ້ຳບີ 1, 2, 3 (Finance Cost) ຊຶ່ງວົງເງິນໃນການລະດົມທຶນຄັ້ງນີ້ 312 ລ້ານໂດລາສະຫາລັດ.

2. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ:

1. ຜະລິດໄຟຟ້າຂາຍຍົກໃຫ້ແກ່ ລັດວິສາຫະກິດໄຟຟ້າລາວ, ກໍ່ສ້າງລະບົບສາຍສົ່ງ ແລະ ສະຖານີໄຟຟ້າຖ້າ ຫາກມີຄວາມຈຳເປັນ;
2. ລົງທຶນໃນບັນດາຊັບສິນທີ່ໃຊ້ໃນການຜະລິດໄຟຟ້າຂອງ ຟຟລ ເຊິ່ງກຳລັງໄດ້ຮັບການກໍ່ສ້າງ ແລະ ໄດ້ຂຶ້ນ ແຜນໄວ້ແລ້ວ ຫລື ລົງທຶນດ້ວຍການເຂົ້າຖືຮຸ້ນທັງໝົດ ຫລື ບາງສ່ວນແທນ ຟຟລ ໃນບັນດາໂຄງການຜູ້ ຜະລິດໄຟຟ້າເອກະລາດ (Independent Power Producer: IPP);
3. ຮັບເໝົາບໍລິການ ການເດີນເຄື່ອງ ແລະ ບຳລຸງຮັກສາ (Operation& Maintenance Service) ໃຫ້ແກ່ ບັນດາໂຄງການຜະລິດໄຟຟ້າຕ່າງໆ ໃນຂອບເຂດທົ່ວປະເທດ.

❖ ວິໄສທັດ

1. ເປັນບໍລິສັດນຳໜ້າອັນດັບໜຶ່ງຂອງ ສປປ ລາວ ໃນການຮັບປະກັນ ແລະ ການຕອບສະໜອງພະລັງງານ ໄຟຟ້າຢ່າງພຽງພໍ ແລະ ທັນການ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ.

2. ເປັນບໍລິສັດທີ່ຈະປະກອບສ່ວນຢ່າງແຂງແຮງ ສ້າງໃຫ້ ສປປ ລາວ ກາຍເປັນຫມໍ້ໄຟ ຂອງອາຊຽນ ແລະ ປະກອບ ສ່ວນຢ່າງເຕັມກຳລັງເຮັດໃຫ້ ຂົງເຂດອາຊຽນ ມີຄວາມໝັ້ນຄົງທາງດ້ານພະລັງງານຢ່າງຍືນຍົງ.

3. ເປັນບໍລິສັດແນວໜ້າໃນການໃຫ້ການບໍລິການ O&M ໂຮງງານໄຟຟ້າ ພາຍໃນ ແລະ ຂົງເຂດອາຊຽນ.

4. ເປັນບໍລິສັດແນວໜ້າໃນການສ້າງມູນຄ່າເພີ່ມ ໃຫ້ແກ່ຜູ້ຖືຮຸ້ນຈາກການລົງທຶນ.

❖ ພາລະກິດ

1. ຢືນຄຽງຄູ່ ແລະ ສົມທົບຢ່າງສະຫນິດແຫນ້ນ ກັບ ລັດວິສາຫະກິດໄຟຟ້າລາວ ໃນການສະໜອງພະລັງງານໄຟຟ້າຢ່າງໝັ້ນຄົງດ້ານປະລິມານ ແລະ ຄຸນນະພາບ ເພື່ອສະຫນອງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ໃນທົ່ວປະເທດ ແລະ ໃນຂົງເຂດອາຊຽນ ດ້ວຍລາຄາທີ່ສົມເຫດສົມຜົນ ແລະ ສ້າງມູນຄ່າໃຫ້ແກ່ຜູ້ຖືຮຸ້ນ.

2. ສະໜອງພະລັງໄຟຟ້າຈາກພະລັງງານທົດແທນທີ່ສະອາດ ເພື່ອສ້າງຄວາມໝັ້ນຄົງ ແລະ ຍືນຍົງທາງດ້ານພະລັງງານ.

3. ລົງທຶນໃນຂະແໜງທຸລະກິດຕ່າງໆ ເພື່ອສ້າງມູນຄ່າເພີ່ມໃຫ້ແກ່ຜູ້ຖືຮຸ້ນໂດຍນຳໃຊ້ທຶນ ແລະ ຊັບສິນຂອງ ບໍລິສັດກໍ່ຄື ຊັບສິນຂອງຜູ້ຖືຮຸ້ນ.

4. ຮັບຜິດຊອບຕໍ່ຜູ້ຖືຮຸ້ນ ແລະ ຜູ້ມີສ່ວນໄດ້ ສ່ວນເສຍ ຢ່າງເຕັມສ່ວນໃນການປົກປັກຮັກສາຊັບສິນ ຂອງຜູ້ຖືຮຸ້ນ ໃຫ້ມີຄວາມຫມັ້ນຄົງ.

5. ຕັ້ງຫນ້າສ້າງຄວາມຮັ່ງມີ ແລະ ມູນຄ່າໃນໄລຍະຍາວໃຫ້ແກ່ຜູ້ຖືຮຸ້ນ.

6. ປະຕິບັດຕາມ ວິໄສທັດ ແລະ ພາລະກິດ ທີ່ໄດ້ຮັບມອບຫມາຍ ຢ່າງຄ່ອງແຄ້ວ ແລະ ມີຫລັກການ ໂດຍຄຳນຶງເຖິງ ບັນດາຄວາມສ່ຽງຕ່າງໆ ໃນປັດຈຸບັນ ແລະ ອະນາຄົດ.

7. ມີຂະບວນການຕັດສິນໃຈ ແລະ ຂັ້ນຕອນການດຳເນີນງານທີ່ ຈະແຈ້ງໂປ່ງໃສ ແລະ ກວດສອບໄດ້.

8. ປະຕິບັດຕໍ່ທຸກຝ່າຍທີ່ກ່ຽວຂ້ອງ ຢ່າງສະເຫມີພາບເທົ່າທຽມກັນ ແລະ ຫຼີກເວັ້ນສະພາບທີ່ຈະກໍ່ໃຫ້ເກີດມີຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດ ຫລື ຜົນປະໂຫຍດຊ້ຳຊ້ອນ.

9. ນຳໃຊ້ ຫົວຄິດປະດິດສ້າງ ແລະ ເຕັກນິກວິທະຍາການ ທີ່ກ້າວຫນ້າແນໃສ່ຍົກສູງປະສິດທິພາບໃນການບໍລິຫານທຸລະກິດ ແລະ ການຜະລິດ ຢ່າງຕໍ່ເນື່ອງ ແລະ ໃຫ້ສາມາດແຂ່ງຂັນໄດ້.

10. ຕັ້ງຫນ້າຍົກສູງ ແລະ ພັດທະນາ ຄຸນສົມບັດ ແລະ ຄວາມສາມາດ ຂອງພະນັກງານ ຂອງບໍລິສັດໃນທຸກລະດັບ ໃຫ້ມີຄວາມກ້າວຫນ້າ ແລະ ມີສ່ວນຮ່ວມໃນການຂະຫຍາຍ ແລະ ພັດທະນາບໍລິສັດ ດ້ວຍຄວາມຮູ້ສຶກທີ່ພາກພູມໃຈມີຄວາມຮັບຜິດຊອບ ແລະ ເປັນເຈົ້າຂອງ ແນໃສ່ພັດທະນາພະນັກງານຂອງບໍລິສັດໃນດ້ານການໃຫ້ບໍລິການ O&M ໃຫ້ໂຮງງານໄຟຟ້າທັງພາຍໃນ-ຂົງເຂດອາຊຽນຢ່າງຕໍ່ເນື່ອງ ແລະໃຫ້ສາມາດແຂ່ງຂັນໄດ້.


11. ເອົາໃຈໃສ່ ຕໍ່ສັງຄົມ, ແຫລ່ງນ້ຳ ແລະ ສິ່ງແວດລ້ອມ.

3. ภ ิ ง จ ั ภ าภาน จ ั ด ต ั ้ ง .

3.1 โ ค ง ร ่ า ง ภ า น จ ั ด ต ั ้ ง .

ໂຄງຮ່າງການຈັດຕັ້ງ ຜ-ຟຟລ ປະກອບດ້ວຍສະພາບໍລິຫານ 09 ທ່ານ (ໃນນີ້ຜູ້ອຳນວຍການອິດສະຫລະ 3 ທ່ານ) ຄະນະຜູ້ອຳນວຍການໃຫຍ່ 4 ທ່ານ, ຜູ້ຊ່ວຍຜູ້ອຳນວຍການໃຫຍ່ 2 ທ່ານ, ມີ 5 ຝ່າຍ, 15 ພະແນກ ແລະ 10 ເຂື່ອນ.

ໂຄງຮ່າງການຈັດຕັ້ງ ບໍລິສັດ ຜລິດ - ໄຟຟ້າລາວ ມະຫາຊົນ



❖ **ຈ ำ ນ ວ ນ ພ ົ ນ**

ຈຳນວນພົນ ຂອງ ຜ-ຟຟລ ມີທັງໝົດ 924 ຄົນ, ຍິງ 185 ຄົນ; ໃນນີ້ ພະນັກງານຖາວອນ 672 ຄົນ, ຍິງ 118 ຄົນ, ພະນັກງານສັນຍາຈ້າງ 252 ຄົນ, ຍິງ 67 ຄົນ.

ລ ายละอ ຽ ด	พ ะน ั ก ง าน ถ า ว อ น					พ ะน ั ก ง าน ส ั น ย า จ ้ า ง				
ສຳນັກງານໃຫຍ່	96	ຄົນ,	ຍິງ	45	ຄົນ	17	ຄົນ,	ຍິງ	13	ຄົນ
ເຂື່ອນໄຟຟ້ານ້ຳງື່ມ 1	146	ຄົນ,	ຍິງ	29	ຄົນ	67	ຄົນ,	ຍິງ	21	ຄົນ
ເຂື່ອນໄຟຟ້ານ້ຳຄານ 2-3	56	ຄົນ,	ຍິງ	4	ຄົນ	19	ຄົນ,	ຍິງ	7	ຄົນ
ເຂື່ອນໄຟຟ້າເຊເສັດ 1-2	87	ຄົນ,	ຍິງ	15	ຄົນ	54	ຄົນ,	ຍິງ	8	ຄົນ
ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່	39	ຄົນ,	ຍິງ	1	ຄົນ	22	ຄົນ,	ຍິງ	4	ຄົນ
ເຂື່ອນໄຟຟ້ານ້ຳເລີກ	52	ຄົນ,	ຍິງ	4	ຄົນ	20	ຄົນ,	ຍິງ	5	ຄົນ
ເຂື່ອນໄຟຟ້ານ້ຳມັງ 3	49	ຄົນ,	ຍິງ	7	ຄົນ	10	ຄົນ,	ຍິງ	3	ຄົນ
ເຂື່ອນໄຟຟ້າເຊເສັດ 3	26	ຄົນ,	ຍິງ	3	ຄົນ	10	ຄົນ,	ຍິງ	5	ຄົນ
ເຂື່ອນໄຟຟ້ານ້ຳສະນາ	26	ຄົນ,	ຍິງ	1	ຄົນ	8	ຄົນ,	ຍິງ	2	ຄົນ
ເຂື່ອນໄຟຟ້ານ້ຳຊອງ	26	ຄົນ,	ຍິງ	1	ຄົນ	5	ຄົນ,	ຍິງ	2	ຄົນ
ເຂື່ອນໄຟຟ້າເຊລະບໍ	31	ຄົນ,	ຍິງ	4	ຄົນ	18	ຄົນ,	ຍິງ	4	ຄົນ
ເຂື່ອນໄຟຟ້າຕາດສະແລນ	0	ຄົນ,	ຍິງ	0	ຄົນ	2	ຄົນ,	ຍິງ	0	ຄົນ
ພະນັກງານທີ່ເຮັດວຽກຢູ່ IPP ແລະ ບໍລິສັດລູກ	18	ຄົນ,	ຍິງ	4	ຄົນ	0	ຄົນ,	ຍິງ	0	ຄົນ
ພະນັກງານປະຈຳໂຄງການ O&M ເຊປຽນ-ເຊນ້ຳນ້ອຍ	6	ຄົນ,	ຍິງ	0	ຄົນ	0	ຄົນ,	ຍິງ	0	ຄົນ
ລວມທັງໝົດ	672	ຄົນ,	ຍິງ	118	ຄົນ	252	ຄົນ,	ຍິງ	67	ຄົນ

* **ໝ ายเหต ุ :** ຜ-ຟຟລ ໄດ້ສົ່ງພະນັກງານໄປຮັບເໝົາການເດີນເຄື່ອງ-ການບຳລຸງຮັກສາ ຢູ່ເຂື່ອນໄຟຟ້ານ້ຳຄານ 3 ເຂື່ອນໄຟຟ້າເຊເສັດ 3 & ເຂື່ອນໄຟຟ້າຕາດສະແລນ

ຄະນະສະພາບໍລິຫານ
ບໍລິສັດ ຜະລິດ -ໄຟຟ້າລາວ ມະຫາຊົນ



ທ່ານ ປອ. ຄຳມະນີ ອິນທິລາດ
ປະທານສະພາບໍລິຫານ



ທ່ານ ບຸນອຸ້ມ ສີວັນເພັ້ງ
ຮອງປະທານສະພາບໍລິຫານ



ທ່ານ ນ. ລັດຕະນາ ປະທຸມວັນ
ກຳມະການ



ທ່ານ ບຸນມາ ມະນີວົງ
ກຳມະການ



ທ່ານ ນ. ວານິດາ ສະຫວັດດີ
ກຳມະການ



ທ່ານ ສີຈາດ ບຸດຊາກິດຕິລາດ
ກຳມະການ



ຮສ.ປອ. ກອງສີ ແສງມະນີ
ກຳມະການອິດສະຫລະ



ສຈ.ປອ. ຄຳລືຊາ ນອນສະຫວັນ
ກຳມະການອິດສະຫລະ



ຮສ. ຄຳເພີຍ ພິມມະຈັນ
ກຳມະການອິດສະຫລະ

ຄະນະຜູ້ອຳນວຍການໃຫຍ່
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



ທ່ານ ນ. ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່



ທ່ານ ທອງເພັດ ດ້ວງເງິນ
ຮອງຜູ້ອຳນວຍການໃຫຍ່
ສາຍງານພັດທະນາທຸລະກິດ



ທ່ານ ປອ. ບຸນສະຫລອງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່
ສາຍງານການເງິນ



ທ່ານ ພູມມີ ເນຕິບັນດິດ
ຮອງຜູ້ອຳນວຍການໃຫຍ່
ສາຍງານຜະລິດ



ທ່ານ ວິຣະຖາ ພອນແກ້ວ
ຜູ້ຊ່ວຍ ຜູ້ອຳນວຍການໃຫຍ່
ຜູ້ອຳນວຍການ ຝ່າຍພັດທະນາທຸລະກິດ



ທ່ານ ນ. ສຸກາສັນ ພົງພິລາ
ຜູ້ຊ່ວຍ ຜູ້ອຳນວຍການໃຫຍ່
ຜູ້ອຳນວຍການ ຝ່າຍແຜນການ

4. ຄະນະກຳມະການຕ່າງໆ

ເພື່ອເຮັດໃຫ້ວຽກງານຂອງບໍລິສັດ ມີຄວາມຮັບປະກັນທາງດ້ານຄຸນນະພາບ ແລະ ມີລະບຽບແບບແຜນ ຕາມກົດໝາຍກົດລະບຽບທີ່ກ່ຽວຂ້ອງ; ສະພາບໍລິຫານ ຜ-ຟຟລ ຈຶ່ງໄດ້ແຕ່ງຕັ້ງຄະນະກຳມະການຕ່າງໆຂຶ້ນ ປະກອບມີ ຄະນະກຳມະການ ຂອງ ສະພາບໍລິຫານ ແລະ ຄະນະກຳມະການ ຂອງ ຄະນະອຳນວຍການໃຫຍ່ ເພື່ອຄົ້ນຄວ້າພິຈາລະນາວຽກງານ, ລະອຽດດັ່ງລຸ່ມນີ້:

4.1 ຄະນະກຳມະການຂອງສະພາບໍລິຫານ

1. ຄະນະກຳມະການກວດສອບ

ໃນການດຳເນີນງານ ໄຕມາດ 3 ປີ 2018 ຄະນະກຳມະການກວດສອບ ໄດ້ປະຕິບັດຕາມພາລະບົດບາດໜ້າທີ່ ແລະ ຄວາມຮັບຜິດຊອບໄປຕາມຂໍ້ກຳນົດຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫລາດຫລັກຊັບລາວ, ເຊິ່ງມີ ລາຍລະອຽດດັ່ງລຸ່ມນີ້:

- ກອງປະຊຸມວິສາມັນຄັ້ງທີ III ຄັ້ງທີ 1 ໄດ້ຈັດຂຶ້ນໃນວັນທີ 16 ກໍລະກົດ 2018
- ກອງປະຊຸມສາມັນຄັ້ງທີ III ຄັ້ງທີ 2 ໄດ້ຈັດຂຶ້ນໃນວັນທີ 17 ສິງຫາ 2018

2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ໃນການດຳເນີນງານ ໄຕມາດ 3 ປີ 2018 ຄະນະກຳມະການຄຸ້ມຄອງຄວາມສ່ຽງໄດ້ເປີດກອງປະຊຸມຂຶ້ນ 01ຄັ້ງ:

- ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 10 ສິງຫາ 2018, ເຊິ່ງເປັນກອງປະຊຸມສະໄໝສາມັນຄັ້ງທີ II ປະຈຳປີ 2018 ຂອງຄະນະກຳມະການຄຸ້ມຄອງຄວາມສ່ຽງ ໃນຫົວຂໍ້ຕ່າງໆທີ່ໄດ້ຄົ້ນຄວ້າປຶກສາຫາລືກັນ ແລະ ໄດ້ມີມະຕິກອງ ປະຊຸມຕິກລົງເຫັນດີເພື່ອແກ້ໄຂ ແລະ ລຸດຜ່ອນຄວາມສ່ຽງ.

3. ຄະນະກຳມະການກຳນົດຄ່າຕອບແທນ

ຄະນະກຳມະການ ກຳນົດຄ່າຕອບແທນ ໄດ້ຖືກແຕ່ງຕັ້ງຂຶ້ນໂດຍ ສະພາບໍລິຫານ ຜ-ຟຟລ ຕາມຂໍ້ຕົກລົງເລກທີ 0041/ຜ-ຟຟລ. ລົງວັນທີ: 06 ມັງກອນ 2017, ປັດຈຸບັນແມ່ນຢູ່ໃນຂັ້ນຕອນກະກຽມການດຳເນີນງານຕາມພາລະ ບົດບາດ.

4. ຄະນະກຳມະການຄັດເລືອກ

ໃນການດຳເນີນງານໄຕມາດ 3 ປີ 2018 ຄະນະກຳມະການຄັດເລືອກໄດ້ຖືກແຕ່ງຕັ້ງຂຶ້ນ ໂດຍ ສະພາບໍລິຫານ ຜ-ຟຟລ ຕາມຂໍ້ຕົກລົງເລກທີ 0042/ຜ-ຟຟລ. ລົງວັນທີ: 06 ມັງກອນ 2017. ປັດຈຸບັນແມ່ນຢູ່ໃນຂັ້ນຕອນການ ກະກຽມດຳເນີນງານຕາມພາລະບົດບາດ.

5. ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

ໃນການດຳເນີນງານໄຕມາດ 3 ປີ 2018, ໂດຍອີງໃສ່ຂໍ້ມູນຜູ້ຖືຮຸ້ນ ແລະ ການດຳເນີນທຸລະກິດຂອງ ຜ-ຟຟລ ແມ່ນ ຍັງບໍ່ມີລາຍການກ່ຽວພັນທີ່ເກີດຂຶ້ນ ລະຫວ່າງ ບໍລິສັດກັບບຸກຄົນ ແລະ ນິຕິກຳບຸກຄົນທີ່ກ່ຽວພັນ.

4.2 ຄະນະກຳມະການຂອງ ຄະນະອຳນວຍການໃຫຍ່

1. ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້ຂາຍໄຟຟ້າ

ໃນການດຳເນີນງານ ໄຕມາດ 3 ປີ 2018 ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້-ຂາຍໄຟຟ້າໄດ້ດຳເນີນວຽກງານ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

- ວັນທີ 10 ສິງຫາ 2018 ສືບຕໍ່ເຈລະຈາຮ່າງສັນຍາສຳປະທານຂອງໂຄງການເຂື່ອນໄຟຟ້ານ້ຳຄານ 2 ແລະ ຫ້ວຍ ລຳພັນໃຫຍ່ ລະຫວ່າງ ຜ-ຟຟລ ແລະ ຕາງໜ້າລັດຖະບານ ໂດຍກົມ ແຜນການ ແລະ ການຮ່ວມມື (ກະຊວງ ພະລັງງານ ແລະ ບໍ່ແຮ່).

2. ຄະນະກຳມະການຈັດຊື້ ແລະ ສະໜອງວັດສະດຸອຸປະກອນ (ຄຈຊ)

ໃນການດຳເນີນງານ ໄຕມາດ 3 ປີ 2018 ຄະນະກຳມະການ ຈັດຊື້ ຜ-ຟຟລ ເປີດກອງປະຊຸມເຈລະຈາ-ປຶກສາຫາລືກັບ ຜູ້ສະໜອງ/ຜູ້ຮັບເໝົາ ຈົນກ້າວໄປສູ່ການເຊັນສັນຍາ ຈຳນວນ 06 ໂຄງການ, ໂດຍແບ່ງອອກເປັນ 03 ພາກສ່ວນ ດັ່ງນີ້:

- ພາກ ການປະຕິບັດວຽກ (Works) ຈຳນວນ: 0 ໂຄງການ
- ພາກ ຈັດຊື້ສິນຄ້າ (Goods) ຈຳນວນ:05 ໂຄງການ
- ພາກ ສະໜອງການບໍລິການ (Service) ຈຳນວນ:01 ໂຄງການ

3. ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ (ຄນຍວ).

ໃນການດຳເນີນງານ ໄຕມາດ 3 ປີ 2018 ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ ໄດ້ພ້ອມກັນຄົ້ນຄ້ວາພິຈາລະນາຫຼາຍບັນຫາ ເພື່ອແກ້ໄຂວຽກງານການດຳເນີນທຸລະກິດ,ປັດຈຸບັນແມ່ນຢູ່ໃນຂັ້ນຕອນການກະກຽມດຳເນີນງານຕາມພາລະບົດບາດ.

5. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ.

ນັບແຕ່ປີ 2010 ເຖິງປັດຈຸບັນ ຜ-ຟຟລ ໄດ້ດຳເນີນທຸລະກິດເປັນເວລາແປດປີແລ້ວ ໃນການຜະລິດກະແສໄຟຟ້າ ເພື່ອຂາຍຍົກໃຫ້ ຟຟລ, ໃນຂະນະດຽວກັນ ຜ-ຟຟລ ຕ້ອງໄດ້ປັບປຸງການຄຸ້ມຄອງບໍລິຫານພາຍໃນໃຫ້ສອດຄ່ອງກັບກົດລະບຽບ ແລະ ກົດໝາຍຕ່າງໆ ທີ່ກ່ຽວກັບບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດຫລັກຊັບລາວ ເພື່ອຮອງຮັບການຂະຫຍາຍຕົວຂອງວຽກງານຂອງ ຜ-ຟຟລ ແລະ ເພື່ອສ້າງພາບພົດ, ຄວາມໝັ້ນໃຈຂອງນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ. ດັ່ງນັ້ນ, ຜົນການດຳເນີນທຸລະກິດໃນໄຕມາດ 3 ປີ 2018 ຈຶ່ງສັງລວມໄດ້ດັ່ງນີ້:

5.1. ການຜະລິດ

ໃນການດຳເນີນງານໄຕມາດ 3 ປີ 2018 ຜ-ຟຟລ ມີເຂື່ອນທີ່ດຳເນີນການຜະລິດກະແສໄຟຟ້າທັງໝົດ 10 ເຂື່ອນມີກຳລັງຕິດຕັ້ງ ທັງໝົດ 1.131 MW. ສາມາດຜະລິດກະແສໄຟຟ້າໄດ້ 796,18 GWh, ເທົ່າກັບ 76,39% ຂອງ ແຜນການ.

5.2. ລາຍຮັບ

ລາຍຮັບສ່ວນໃຫຍ່ ຂອງ ຜ-ຟຟລ ແມ່ນລາຍຮັບຈາກການຈຳໜ່າຍກະແສໄຟຟ້າໃຫ້ ຟຟລ, ຊຶ່ງລາຍຮັບໃນໄຕມາດ 3 ປີ 2018 ນີ້, ຜ-ຟຟລ ສາມາດສ້າງລາຍຮັບໄດ້ 374.803 ລ້ານກີບ, ຫຼຸດແຜນການ 23,87% ໃນນີ້ລາຍຮັບຈາກການຈຳໜ່າຍກະແສໄຟ 367.222 ລ້ານກີບ ເທົ່າກັບ 97,98% ຂອງ ລາຍຮັບທັງໝົດ ແລະ ລາຍຮັບອື່ນໆ 7.581 ລ້ານກີບ ເທົ່າກັບ 2,02% ຂອງ ລາຍຮັບທັງໝົດ.

5.3. ລາຍຈ່າຍ

ລາຍຈ່າຍໃນການດຳເນີນທຸລະກິດ ຂອງ ຜ-ຟຟລ ໃນໄຕມາດ 3 ປີ 2018 ເປັນເງິນທັງໝົດ 603.870 ລ້ານກີບ ເທົ່າກັບ 161,12%ຂອງລາຍຮັບທັງໝົດ ເນື່ອງຈາກການເພີ່ມຂຶ້ນຂອງພາກລາຍຈ່າຍໃນການດຳເນີນງານ ແລະ ລາຍຈ່າຍຂາດທຶນອັດຕາແລກປ່ຽນ ໃນນີ້:

ລາຍຈ່າຍໃນການດຳເນີນທຸລະກິດ ໃນໄຕມາດ 3 ປີ 2018			
ລ/ດ	ລາຍການລະອຽດ	ຈຳນວນ ລ້ານກີບ	(%) ທຽບໃສ່ລາຍຮັບທັງໝົດ
1	ຂາດທຶນອັດຕາແລກປ່ຽນເງິນຕາຕ່າງປະເທດ	257.442	68,69%
2	ລາຍຈ່າຍທາງການເງິນ	167.822	44,78%
3	ຕົ້ນທຶນໃນການຂາຍ	122.886	32,79%
4	ລາຍຈ່າຍໃນການດຳເນີນງານ	55.720	14,87%
ລວມທັງໝົດ		603.870	161,12%

5.4. ກຳໄລໃນການດຳເນີນທຸລະກິດ

ໄຕມາດ 3 ປີ 2018 ຈະມີກຳໄລຈາກ 2 ພາກຄື:

1. ກຳໄລສຸດທິ ຈາກການດຳເນີນທຸລະກິດຂອງ ຜ-ຟຟລ ທີ່ມີລາຍຮັບ ແລະ ລາຍຈ່າຍຂ້າງເທິງນີ້, ເຫັນວ່າ ຜ-ຟຟລ ຂາດດຸນງົບປະມານຢູ່ 229.067 ລ້ານກີບ.
2. ກຳໄລສຸດທິ ຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນເປັນເງິນທັງໝົດ 151.094 ລ້ານກີບ ລວມກຳໄລໃນໄຕມາດ 3 ປີ 2018 ທັງໝົດຕິດລົບ 77.973 ລ້ານກີບ.

5.5. ການມອບພັນທະ

ຜ-ຟຟລ ແມ່ນບໍລິສັດມະຫາຊົນ ທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ໂດຍທາງດ້ານນິຕິກຳ ຜ-ຟຟລ ກໍ່ແມ່ນ ບໍລິສັດໜຶ່ງ ທີ່ດຳເນີນທຸລະກິດ ພາຍໃຕ້ກົດໝາຍ ຂອງ ສປປລາວ; ດັ່ງນັ້ນ ການມອບພັນທະກໍ່ເປັນອີກວຽກໜຶ່ງ ທີ່ ຜ-ຟຟລ ໄດ້ເອົາໃຈໃສ່ປະຕິບັດຢ່າງຕັ້ງໜ້າ ພັນທະທີ່ ຜ-ຟຟລ ມອບໃຫ້ລັດ, ປະກອບດ້ວຍ ອາກອນມູນຄ່າເພີ່ມ, ຄ່າພາກຫລວງ ແລະ ອາກອນເງິນເດືອນ-ເງິນບຳເນັດ-ເບ້ຍປະຊຸມ. ໃນໄຕມາດ 3 ປີ 2018 ລວມມອບທັງໝົດ 7.911 ລ້ານກີບ ໃນນີ້ມີ:

ລຳດັບ	ລາຍການລະອຽດ	ໜ່ວຍ: ລ້ານກີບ
1	ອາກອນມູນຄ່າເພີ່ມ	4.029
2	ຄ່າພາກຫລວງ	2.713
3	ອາກອນເງິນເດືອນ-ເງິນບຳເນັດ-ເບ້ຍປະຊຸມ	1.169
	ລວມທັງໝົດ	7.911

ເອກະສານລາຍງານການເງິນ ປະຈຳໄຕມາດ III
30 ກັນຍາ 2018

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ເອກະສານລາຍງານການເງິນປະຈຳໄຕມາດ 3 (ກ່ອນກວດສອບ)

ວັນທີ 30 ກັນຍາ 2018

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ໃບລາຍງານຖານະການເງິນ ລະຫວ່າງປີ ແບບສະຫຼຸບຫຍໍ້

	ບົດອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		30 ກັນຍາ 2018 (ກ່ອນກວດສອບ)	31 ທັນວາ 2017	30 ກັນຍາ 2018 (ກ່ອນກວດສອບ)	31 ທັນວາ 2017
				(ລ້ານກີບ)	
ຊັບສິນ					
ເງິນລົງທຶນ ໃນບໍລິສັດລູກ		-	-	85.160	82.760
ເງິນລົງທຶນ ໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	*3*	3.511.334	2.606.394	3.511.334	2.606.394
ເງິນລົງທຶນຈ່າຍລ່ວງໜ້າສຳລັບຊັບສິນພາຍໃຕ້ ສັນຍາສຳປະທານ ແລະ ເງິນລົງທຶນ	*4, 12*	6.288.420	4.436.159	7.089.952	5.101.121
ເງິນຈ່າຍລ່ວງໜ້າສຳລັບສັນຍາແລກປ່ຽນອັດຕາດອກເບ້ຍ collar	*9*	29.521	36.058	29.521	36.058
ຊັບສິນຢູ່ພາຍໃຕ້ການສຳປະທານ	*5*	9.913.748	9.790.198	9.479.819	9.408.829
ເງິນຝາກໄລຍະຍາວ		97.423	66.334	97.423	66.334
ໜີ້ຕ້ອງຮັບຈາກສັນຍາ SWAP	*9*	44.017	-	44.017	-
ຊັບສິນທີ່ບໍ່ໝຸນວຽນອື່ນໆ		347.930	190.218	6.855	6.538
ລວມຊັບສິນບໍ່ໝຸນວຽນ		**20.232.393**	**17.125.361**	**20.344.081**	**17.308.034**
ເງິນສົດ ແລະ ທຽບເທົ່າເງິນສົດ		591.337	756.738	501.193	678.322
ເງິນລົງທຶນໄລຍະສັ້ນ		130.565	955.301	130.565	955.301
ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	*12*	357.210	463.392	357.210	463.392
ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ	*6, 12*	1.040.080	149.452	1.028.374	144.598
ສ່ວນທີ່ເຖິງກຳນົດຈ່າຍເງິນລ່ວງໜ້າສຳລັບ ສັນຍາແລກປ່ຽນອັດຕາດອກເບ້ຍ collar	*9*	14.581	14.581	14.581	14.581
ອາໄຫ່ ແລະ ເຄື່ອງໃນສາງ		4.262	4.458	4.262	4.458
ຊັບສິນໝຸນວຽນອື່ນໆ		43.861	149.910	40.801	35.594
ລວມຊັບສິນໝຸນວຽນ		**2.181.896**	**2.493.832**	**2.076.986**	**2.296.246**
ລວມຍອດຊັບສິນ		**22.414.289**	**19.619.193**	**22.421.067**	**19.604.280**

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 13 ພະຈິກ 2018

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 13 ພະຈິກ 2018

ບົດອະທິບາຍ ປະກອບເຫຼົ່ານີ້ແມ່ນສ່ວນທີ່ສຳຄັນຂອງຂໍ້ມູນທາງດ້ານການເງິນລະຫວ່າງປີແບບສະຫຼຸບຫຍໍ້.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ໃບລາຍງານຖານະການເງິນ ລະຫວ່າງປີ ແບບສະຫຼຸບຫຍໍ້

	ບົດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		30 ກັນຍາ 2018 (ກ່ອນກວດສອບ)	31 ທັນວາ 2017	30 ກັນຍາ 2018 (ກ່ອນກວດສອບ)	31 ທັນວາ 2017
				(ລ້ານກີບ)	
ທຶນຂອງຜູ້ຖືຮຸ້ນ					
ຮຸ້ນທຶນ/ທຶນຈົດທະບຽນ		6.717.215	6.717.215	6.717.215	6.717.215
ສ່ວນເພີ່ມມູນຄ່າຮຸ້ນ		985.621	985.621	985.621	985.621
ຄັງສະສົມຕາມລະບຽບການ		463.944	463.944	463.944	463.944
ຜົນຕ່າງຈາກການແປງຄ່າ ເອກະສານລາຍງານການເງິນ		5.717	2.302	5.717	2.302
ກຳໄລສະສົມ		564:917	1.040.000	572.866	1.042.447
ສ່ວນຂອງຜູ້ຖືຮຸ້ນບໍລິສັດ		8.737.414	9.209.082	8.745.363	9.211.529
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄອບຄຸມ		(3.126)	(263)	-	-
ລວມຍອດທຶນຂອງຜູ້ຖືຮຸ້ນທັງໝົດ		**8.734.288**	**9.208.819**	**8.745.363**	**9.211.529**
ໜີ້ສິນ					
ເງິນກູ້ຢືມໄລຍະຍາວ	*7*	3.851.106	4.206.348	3.851.106	4.206.348
ຮຸ້ນກູ້	*8*	7.934.016	4.152.882	7.934.016	4.152.882
ໜີ້ຕ້ອງສົ່ງຈາກສັນຍາ SWAP	*9*	-	3.856	-	3.856
ລວມໜີ້ສິນບໍ່ໝຸນວຽນ		**11.785.122**	**8.363.086**	**11.785.122**	**8.363.086**
ເງິນກູ້ຢືມໄລຍະສັ້ນ	*7*	113.701	870.573	113.701	870.573
ເງິນກູ້ຢືມໄລຍະຍາວເຖິງກຳນົດຈັດເປັນໄລຍະສັ້ນ	*7*	585.953	529.912	585.953	529.912
ໜີ້ຕ້ອງສົ່ງການຄ້າ ແລະ ອື່ນໆ		967.866	535.079	965.291	517.911
ລາຍຈ່າຍຄ້າງຈ່າຍ		226.589	111.222	224.867	110.767
ໜີ້ສິນໝຸນວຽນອື່ນໆ		770	502	770	502
ລວມຍອດໜີ້ສິນໝຸນວຽນ		**1.894.879**	**2.047.288**	**1.890.582**	**2.029.665**
ລວມຍອດໜີ້ສິນ		**13.680.001**	**10.410.374**	**13.675.704**	**10.392.751**
ລວມຍອດທຶນຕົນເອງ ແລະ ໜີ້ສິນ		**22.414.289**	**19.619.193**	**22.421.067**	**19.604.280**

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 13 ພະຈິກ 2018

ທ່ານ ບຸນສະຫງວ່ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 13 ພະຈິກ 2018

ບົດອະທິບາຍ ປະກອບເຫຼົ່ານີ້ແມ່ນສ່ວນທີ່ສຳຄັນຂອງຂໍ້ມູນທາງດ້ານການເງິນລະຫວ່າງປີແບບສະຫຼຸບຫຍໍ້.

	ບິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ ສຳລັບສາມເດືອນສິ້ນສຸດ ວັນທີ 30 ກັນຍາ 2018	2017	ເອກະສານລາຍງານການເງິນ ແບບແຍກ ສຳລັບສາມເດືອນສິ້ນສຸດ ວັນທີ 30 ກັນຍາ 2018	2017
			(ລ້ານກີບ)		
ສືບຕໍ່ດຳເນີນງານ					
ຂາຍ	*12*	372.481	402.187	367.222	401.584
ຕົ້ນທຶນໃນການຂາຍ		(126.625)	(123.472)	(122.886)	(122.450)
ກຳໄລລວມ		245.856	278.715	244.336	279.134
ລາຍຮັບອື່ນໆ		7.581	5.787	7.581	5.788
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ		(57.386)	(24.052)	(55.720)	(23.181)
ຂາດທຶນສຸດທິຈາກອັດຕາແລກປ່ຽນ		(260.658)	(43.671)	(257.442)	(44.377)
ກຳໄລ ຂອງຮຸ້ນຈາກເງິນລົງທຶນໃນ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	*3*	151.094	146.669	151.094	146.669
ກຳໄລຈາກການດຳເນີນງານ		**86.487**	**363.448**	**89.849**	**364.033**
ລາຍຈ່າຍທາງການເງິນ		(167.822)	(119.929)	(167.822)	(119.929)
ກຳໄລ(ຂາດທຶນ) ກ່ອນອາກອນກຳໄລ		**(81.335)**	**243.519**	**(77.973)**	**244.104**
ອາກອນກຳໄລ		-	(15.114)	-	(15.114)
ກຳໄລ(ຂາດທຶນ) ສຳລັບໃນຮອບເວລາ		**(81.335)**	**228.405**	**(77.973)**	**228.990**
ສ່ວນຂອງກຳໄລ(ຂາດທຶນ) ທີ່ເປັນຂອງ:					
ສ່ວນຂອງບໍລິສັດແມ່		(80.768)	229.272	(77.973)	228.990
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		(567)	(867)	-	-
ກຳໄລ(ຂາດທຶນ)ໃນຮອບເວລາ		**(81.335)**	**228.405**	**(77.973)**	**228.990**
ກຳໄລ(ຂາດທຶນ) ຕໍ່ຮຸ້ນ					
ກຳໄລ(ຂາດທຶນ) ພື້ນຖານຕໍ່ຮຸ້ນ *(ກີບ)*	*10*	(48,10)	136,55	(46,44)	136,38

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 13 ພະຈິກ 2018

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 13 ພະຈິກ 2018

ບິດອະທິບາຍ ປະກອບເຫຼົ່ານີ້ແມ່ນສ່ວນທີ່ສຳຄັນຂອງຂໍ້ມູນທາງດ້ານການເງິນລະຫວ່າງປີແບບສະຫຼຸບຫຍໍ້.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ໃບລາຍງານສ່ວນປ່ຽນແປງຂອງທຶນ ລະຫວ່າງປີ ແບບສະຫຼຸບຫຍໍ້

		ເອກະສານລາຍງານການເງິນແບບລວມ							
		ສ່ວນຂອງຜູ້ຖືຮຸ້ນບໍລິສັດ							
	ບົດ ອະທິບາຍ	**ທຶນ ຈົດທະບຽນ**	**ສ່ວນເພີ່ມ ມູນຄ່າຮຸ້ນ**	**ຄັງສະສົມຕາມ ລະບຽບການ**	**ຜົນຕ່າງຈາກການ ແປງຄ່າເອກະສານ ລາຍງານການເງິນ**	**ກຳໄລ ສະສົມ**	**ລວມ**	**ສ່ວນໄດ້ເສຍ ທີ່ບໍ່ມີອຳນາດ ໃນການຄວບຄຸມ**	**ລວມຍອດທຶນ ຂອງຜູ້ຖືຮຸ້ນທັ້ງໝົດ**
					(ລ້ານກີບ)				
ສຳລັບຮອບສາມເດືອນສິ້ນສຸດ ວັນທີ 30 ກັນຍາ 2017									
ຍອດເຫຼືອໃນວັນທີ 1 ກໍລະກົດ 2017		6.717.215	985.621	416.729	(681)	929.153	9.048.037	527	9.048.564
ກຳໄລໃນຮອບເວລາ		-	-	-	-	229.272	229.272	(867)	228.405
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	*3*	-	-	-	(90)	-	(90)	-	(90)
ຈ່າຍເງິນປັນຜົນ	*11*	-	-	-	-	(184.723)	(184.723)	-	(184.723)
ຍອດເຫຼືອໃນວັນທີ 30 ກັນຍາ 2017		**6.717.215**	**985.621**	**416.729**	**(771)**	**973.702**	**9.092.496**	**(340)**	**9.092.156**
ສຳລັບຮອບສາມເດືອນສິ້ນສຸດ ວັນທີ 30 ກັນຍາ 2018									
ຍອດເຫຼືອໃນວັນທີ 1 ກໍລະກົດ 2018 (ກ່ອນກວດສອບ)		6.717.215	985.621	463.944	5.466	830.408	9.002.654	(2.559)	9.000.095
ກຳໄລ (ຂາດທຶນ) ໃນຮອບເວລາ		-	-	-	-	(80.768)	(80.768)	(567)	(81.335)
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	*3*	-	-	-	251	-	251	-	251
ຈ່າຍເງິນປັນຜົນ	*11*	-	-	-	-	(184.723)	(184.723)	-	(184.723)
ຍອດເຫຼືອໃນວັນທີ 30 ກັນຍາ 2018		**6.717.215**	**985.621**	**463.944**	**5.717**	**564.917**	**8.737.414**	**(3.126)**	**8.734.288**

ບົດອະທິບາຍ ປະກອບເຫຼົ່ານີ້ແມ່ນສ່ວນທີ່ສຳຄັນຂອງຂໍ້ມູນທາງດ້ານການເງິນລະຫວ່າງປີແບບສະຫຼຸບຫຍໍ້.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ໃບລາຍງານສ່ວນປ່ຽນແປງຂອງທຶນ ລະຫວ່າງປີ ແບບສະຫຼຸບຫຍໍ້

	ບົດອະທິບາຍ	ທຶນຈົດທະບຽນ	ສ່ວນເພີ່ມມູນຄ່າຮຸ້ນ	ຄັງສະສົມຕາມລະບຽບການ	ເອກະສານລາຍງານການເງິນແບບແຍກ ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	ກຳໄລສະສົມ	ລວມຍອດທຶນຂອງຜູ້ຖືຮຸ້ນທັງໝົດ
					(ລ້ານກີບ)		
ສຳລັບຮອບສາມເດືອນສິ້ນສຸດ ວັນທີ 30 ກັນຍາ 2017							
ຍອດເຫຼືອໃນວັນທີ 1 ກໍລະກົດ 2017		6.717.215	985.621	416.729	(681)	932.477	9.051.361
ກຳໄລໃນຮອບເວລາ		-	-	-	-	228.990	228.990
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	*3*	-	-	-	(90)	-	(90)
ຈ່າຍເງິນປັນຜົນ	*11*	-	-	-	-	(184.723)	(184.723)
ຍອດເຫຼືອໃນວັນທີ 30 ກັນຍາ 2017		**6.717.215**	**985.621**	**416.729**	**(771)**	**976.744**	**9.095.538**
ຮອບສາມເດືອນສິ້ນສຸດ ວັນທີ 30 ກັນຍາ 2018							
ຍອດເຫຼືອໃນວັນທີ 1 ກໍລະກົດ 2018		6.717.215	985.621	463.944	5.466	835.562	9.007.808
ກຳໄລ (ຂາດທຶນ) ໃນຮອບເວລາ		-	-	-	-	(77.973)	(77.973)
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	*3*	-	-	-	251	-	251
ຈ່າຍເງິນປັນຜົນ	*11*	-	-	-	-	(184.723)	(184.723)
ຍອດເຫຼືອໃນວັນທີ 30 ກັນຍາ 2018		**6.717.215**	**985.621**	**463.944**	**5.717**	**572.866**	**8.745.363**

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 13 ພະຈິກ 2018

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 13 ພະຈິກ 2018

ບົດອະທິບາຍ ປະກອບເຫຼົ່ານີ້ແມ່ນສ່ວນທີ່ສຳຄັນຂອງຂໍ້ມູນທາງດ້ານການເງິນລະຫວ່າງປີແບບສະຫຼຸບຫຍໍ້.

	ບົດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ ສຳລັບສາມເດືອນສິ້ນສຸດ ວັນທີ 30 ກັນຍາ		ເອກະສານລາຍງານການເງິນ ແບບແຍກ ສຳລັບສາມເດືອນສິ້ນສຸດ ວັນທີ 30 ກັນຍາ	
		2018	2017	2018	2017
			(ລ້ານກີບ)		
ກະແສເງິນສົດຈາກກິດຈະກຳການດຳເນີນງານ					
ກຳໄລ (ຂາດທຶນ) ໃນຮອບເວລາ		(81.335)	228.405	(77.973)	228.990
ປັບປຸງ :					
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ	5	113.704	108.522	111.030	108.187
ລາຍຈ່າຍການເງິນ		167.822	119.929	167.822	119.929
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ		132.554	56.919	128.404	56.919
ກຳໄລຂອງຮຸ້ນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	3	(151.094)	(146.669)	(151.094)	(146.669)
ລາຍຈ່າຍອາກອນກຳໄລ		-	15.114	-	15.114
		181.651	**382.220**	**178.189**	**382.470**
ການປ່ຽນແປງ:					
ຊັບສິນທີ່ບໍ່ໝຸນວຽນອື່ນໆ		442	34.401	443	(122.327)
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(459.864)	(628.379)	(457.049)	(628.542)
ອາໄຫ່ ເຄື່ອງໃນສາງ		402	(4)	402	(4)
ຊັບສິນໝຸນວຽນອື່ນໆ		(1.439)	(142.443)	(4.178)	(1.933)
ໜີ້ຕ້ອງສົ່ງຜູ້ສະໜອງການຄ້າ ແລະ ອື່ນໆ		20.499	16.864	19.179	7.214
ລາຍຈ່າຍຄ້າງຈ່າຍ		52.927	6.378	52.570	7.871
ໜີ້ສິນໝຸນວຽນອື່ນໆ		73	(1.238)	74	20
ເງິນສົດທີ່ໃຊ້ໃນ ກິດຈະກຳການດຳເນີນງານ		(205.309)	(332.201)	(210.370)	(355.231)
ຈ່າຍອາກອນກຳໄລ		-	(12.278)	-	(12.278)
ເງິນສົດສຸດທິທີ່ໃຊ້ໃນກິດຈະກຳການດຳເນີນງານ		**(205.309)**	**(344.479)**	**(210.370)**	**(367.509)**
ກະແສເງິນສົດຈາກກິດຈະກຳການລົງທຶນ					
ເງິນລົງທຶນຈ່າຍລ່ວງໜ້າສຳລັບຊັບສິນພາຍໃຕ້ ສັນຍາສຳປະທານ ແລະ ເງິນລົງທຶນ		(2.446.768)	(825.300)	(2.446.768)	(825.300)
ເງິນລົງທຶນໃນບໍລິສັດລູກ		-	-	-	(42.042)
ເງິນລົງທຶນໃນບໍລິສັດຮຸ້ນສ່ວນ ແລະ ວິສາຫະກິດຮຸ້ນສ່ວນ	3	(6.580)	(7.441)	(6.580)	(7.441)
ຊື້ຊັບສິນພາຍໃຕ້ສັນຍາສຳປະທານ		(49.737)	(98.949)	(39.931)	(54.370)
ຮັບເງິນປັນຜົນຈາກເງິນລົງທຶນໃນວິສາຫະກິດ ຂາຮຸ້ນ ແລະ ວິສາຫະກິດຮຸ້ນສ່ວນ	3	269.534	208.642	269.534	208.642
ຈ່າຍເງິນລົງທຶນໄລຍະສັ້ນ		-	(24.831)	-	(24.831)
ຈ່າຍເງິນໃຫ້ພາກສ່ວນທີ່ກ່ຽວຂ້ອງກູ້ຢືມໄລຍະສັ້ນ		-	(33.108)	-	(33.108)
ເງິນສົດສຸດທິທີ່ໃຊ້ໃນກິດຈະກຳການລົງທຶນ		**(2.233.551)**	**(780.987)**	**(2.223.745)**	**(778.450)**

ບົດອະທິບາຍ ປະກອບເຫຼົ່ານີ້ແມ່ນສ່ວນທີ່ສຳຄັນຂອງຂໍ້ມູນທາງດ້ານການເງິນລະຫວ່າງປີແບບສະຫຼຸບຫຍໍ້.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ໃບລາຍງານກະແສເງິນສົດ ລະຫວ່າງປີ ແບບສະຫຼຸບຫຍໍ້

	ບົດອະທິບາຍ	ເອກະສານລາຍງານການເງິນ ແບບລວມ ສຳລັບສາມເດືອນສິ້ນສຸດ ວັນທີ 30 ກັນຍາ 2018	2017	ເອກະສານລາຍງານການເງິນ ແບບແຍກ ສຳລັບສາມເດືອນສິ້ນສຸດ ວັນທີ 30 ກັນຍາ 2018	2017
			(ລ້ານກີບ)		
ກະແສເງິນສົດຈາກກິດຈະກຳທາງການເງິນ					
ລາຍຈ່າຍທາງການເງິນ		(105.414)	(85.972)	(105.414)	(85.972)
ຄ່າໃຊ້ຈ່າຍໃນການອອກຮຸ້ນກູ້		(66.163)	-	(66.163)	-
ລາຍຈ່າຍເງິນປັນຜົນ		(50.847)	-	(50.847)	-
ຮັບເງິນສົດຈາກການກູ້ຢືມໄລຍະສັ້ນ	7	44.887	828.500	44.887	828.500
ຮັບເງິນສົດຈາກການກູ້ຢືມໄລຍະຍາວ	7	-	164.346	-	164.346
ຮັບເງິນສົດຈາກການອອກຮຸ້ນກູ້	8	3.532.989	-	3.532.989	-
ຊຳລະເງິນກູ້ຢືມໄລຍະສັ້ນ	7	(884.785)	-	(884.785)	-
ຊຳລະເງິນກູ້ຢືມໄລຍະຍາວ	7	(41.695)	(97.220)	(41.695)	(97.220)
ເງິນສົດສຸດທິທີ່ໄດ້ມາຈາກກິດຈະການທາງການເງິນ		**2.428.972**	**809.654**	**2.428.972**	**809.654**
ການເພີ່ມຂຶ້ນ (ຫຼຸດລົງ) ໃນເງິນສົດ ແລະ ທຽບເທົ່າເງິນສົດ		(9.888)	(315.812)	(5.143)	(336.305)
ຜົນກະທົບຈາກອັດຕາແລກປ່ຽນກັບຍອດເຫຼືອຂອງ					
ເງິນຕາຕ່າງປະເທດທີ່ມີໃນມື້ໃນມື້ສິ້ນງວດ		8.502	4.960	8.502	4.960
ເງິນສົດ ແລະ ທຽບເທົ່າເງິນສົດ ໃນຕົ້ນງວດ		592.723	1.589.352	497.834	1.517.767
ເງິນສົດ ແລະ ທຽບເທົ່າເງິນສົດໃນມື້ສິ້ນງວດ		**591.337**	**1.278.500**	**501.193**	**1.186.422**
ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ					
ໜີ້ຕ້ອງສົ່ງຊື້ຊັບສິນບັດຄົງທີ່ ພາຍໃຕ້ສັນຍາສຳປະທານ		585.288	309.737	585.288	309.737
ໜີ້ຕ້ອງສົ່ງເງິນລົງທຶນໃນວິສາຫະກິດຮ່ວມ		5.537	-	5.537	-
ເງິນປັນຜົນຄ້າງຊຳລະ		223.876	184.723	223.876	184.723
ຫັກລ້າງເງິນຈ່າຍລ່ວງໜ້າສຳລັບຊັບສິນພາຍໃຕ້ສັນຍາສຳປະທານ					
ແລະ ເງິນລົງທຶນ ກັບເງິນກູ້ຢືມໄລຍະສັ້ນຂອງພາກສ່ວນທີ່ກ່ຽວຂ້ອງ		42.230	-	42.230	-

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 13 ພະຈິກ 2018

ທ່ານ ບຸນສະຫງວ່ຽ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 13 ພະຈິກ 2018

ບົດອະທິບາຍ ປະກອບເຫຼົ່ານີ້ແມ່ນສ່ວນທີ່ສຳຄັນຂອງຂໍ້ມູນທາງດ້ານການເງິນລະຫວ່າງປີແບບສະຫຼຸບຫຍໍ້.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ບົດອະທິບາຍຊ້ອນທ້າຍປະກອບເອກະສານລາຍງານການເງິນລະຫວ່າງປີແບບສະຫຼຸບຫຍໍ້
ສຳລັບຮອບເວລາລາຍງານສາມເດືອນ ສິ້ນສຸດ ວັນທີ 30 ກັນຍາ 2018 (ກ່ອນກວດສອບ)

ບົດອະທິບາຍ	ເນື້ອໃນ
ພື້ນຖານການກະກຽມ	
1	ການລາຍງານກິດຈະການ
2	ພື້ນຖານການບັນຊີ
ຊັບສິນ	
3	ເງິນລົງທຶນ ໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ
4	ເງິນຈ່າຍລ່ວງໜ້າສຳລັບຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ
5	ຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ
6	ໜີ້ຕ້ອງຮັບຈາກລູກໜີ້ການຄ້າ ແລະ ໜີ້ຕ້ອງຮັບອື່ນໆ
ໜີ້ສິນ	
7	ເງິນກູ້ຢືມ
8	ຮຸ້ນກູ້
9	ຕາສານອານຸພັນ
ຂໍ້ມູນອື່ນໆ	
10	ກຳໄລ(ຂາດທຶນ)ພື້ນຖານຕໍ່ຮຸ້ນ
11	ເງິນປັນຜົນ
12	ພາກສ່ວນທີ່ກ່ຽວຂ້ອງ
13	ເຫດການທີ່ເກີດຂຶ້ນພາຍຫຼັງການລາຍງານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ບົດອະທິບາຍຊ້ອນທ້າຍປະກອບເອກະສານລາຍງານການເງິນລະຫວ່າງປີແບບສະຫຼຸບຫຍໍ້ ສຳລັບຮອບເວລາລາຍງານສາມເດືອນ ສິ້ນສຸດ ວັນທີ 30 ກັນຍາ 2018 (ກ່ອນກວດສອບ)

1 ການລາຍງານກິດຈະການ

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ ("ກຸ່ມບໍລິສັດ" ຫຼື "ຜ-ຟຟລ") ເປັນ ບໍລິສັດມະຫາຊົນ ເຊິ່ງໄດ້ຈົດທະບຽນເຂົ້າ ໃນຕະຫຼາດຫຼັກຊັບແຫ່ງ ສປປ ລາວ ("ຕລຊລ") ວັນທີ 11 ມັງກອນ 2011 ແລະ ຖືກຄຸ້ມຄອງໂດຍ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປລາວ"). ກຸ່ມບໍລິສັດ ໄດ້ຖືກສ້າງຕັ້ງຂຶ້ນ ແລະ ຈົດທະບຽນ ກັບ ກະຊວງອຸດສະຫະ ກຳ ແລະ ການຄ້າ ໃນວັນທີ 15 ທັນວາ 2010. ກຸ່ມບໍລິສັດໃນເຄືອຂອງ ລັດວິສາຫະກິດໄຟຟ້າລາວ ("ຟຟລ") ເຊິ່ງຖືຮຸ້ນ 75%.

ການຈົດທະບຽນຂອງກຸ່ມບໍລິສັດໄດ້ລິເລີ່ມໂດຍ ຟຟລ ເຊື່ອມຕໍ່ກັບການປັບໂຄງສ້າງຂອງທຸລະກິດພະລັງງານຂອງ ຟຟລ ໂດຍການໂອນຊັບສິນ ການຜະລິດທີ່ມີຢູ່ ແລະ ສິດທິສະເພາະດ້ານໃດດ້ານໜຶ່ງ ແລະ ພັນທະໃຫ້ກຸ່ມບໍລິສັດ ອີງຕາມ ສຳ ນັກງານນາຍົກລັດຖະມົນຕີ ("ສນຍ") ສະບັບເລກທີ 180 ລົງວັນທີ 13 ທັນວາ 2010. ສນຍ ໄດ້ອະນຸມັດໃຫ້ ຟຟລ ຂາຍຮຸ້ນຂອງຕົນໃນໂຄງການໂຮງງານໄຟຟ້າເອກະລາດ ("IPP") ໃຫ້ກັບກຸ່ມບໍລິສັດ.

ໃນວັນທີ 15 ທັນວາ 2010, ຟຟລ ໄດ້ໂອນຊັບສິນການຜະລິດທີ່ມີຢູ່ ແລະ ໜີ້ສິນທີ່ກ່ຽວຂ້ອງຂອງ 7 ເຂື່ອນໄຟຟ້າ ນ້ຳຕົກ, ລວມມີ ເຂື່ອນນ້ຳງື່ມ 1, ເຂື່ອນນ້ຳເລິກ, ເຂື່ອນນ້ຳມັງ 3, ເຂື່ອນນ້ຳຊອງ, ເຂື່ອນເຊເຊັດ 1, ເຂື່ອນເຊເຊັດ 2, ເຂື່ອນເຊລະບໍ, ຕາມມູນຄ່າສຸດທິ ໃນວັນທີ 20 ຕຸລາ 2010, ໃຫ້ກຸ່ມບໍລິສັດ ເປັນຈຳນວນເງິນ 2.605.792 ລ້ານກີບ. ຟຟລ ຈະສືບຕໍ່ ກິດຈະກຳ ຂອງຕົນຢູ່ໃນລະບົບສາຍສົ່ງ ແລະ ການແຜ່ກະຈາຍຂອງໄຟຟ້າ ທີ່ຜະລິດໂດຍໃຊ້ຊັບສິນ ການຜະລິດທີ່ມີຢູ່ໄປ ເຖິງຜູ້ຊົມໃຊ້, ຕັ້ງແຕ່ 15 ທັນວາ 2010, ກຸ່ມບໍລິສັດໄດ້ເລີ່ມການດຳເນີນງານການຜະລິດໄຟຟ້າ ຂອງຕົນສ່ວນໃຫຍ່ແມ່ນຂຶ້ນຢູ່ກັບຊັບສິນ ການໂອນຍ້າຍ ດັ່ງກ່າວຈະສະໜອງໄຟຟ້າທີ່ຜະລິດ ກັບຄືນໄປໃຫ້ ຟຟລ ອີງຕາມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ລະບຸໄວ້ໃນ ສັນຍາ ຊື້ຂາຍພະລັງງານ ("PPA").

ນອກຈາກນັ້ນ, ກຸ່ມບໍລິສັດໄດ້ສືບຕໍ່ຊື້ໂຄງການພະລັງງານ ແລະ ສ້າງຕັ້ງບໍລິສັດຮ່ວມທຶນໃໝ່ກັບຄູ່ສັນຍາທີ່ກ່ຽວຂ້ອງ ແລະ ຟຟລ.

ທີ່ຕັ້ງສຳນັກງານຂອງກຸ່ມບໍລິສັດ ຕັ້ງຢູ່ຊັ້ນ 7, ອາຄານສຳນັກງານໃຫຍ່ຂອງ ຟຟລ, ຖະໜົນ ມິດຕະພາບລາວໄທ, ບ້ານທົ່ງ ກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໄປສະນີ 2392, ສປປ ລາວ.

ເອກະສານລາຍງານການເງິນລວມປະຈຳໄຕມາດ 3 ໄດ້ຮັບອະນຸມັດໃຫ້ອອກ ໂດຍຄະນະກຳມະການຜູ້ບໍລິຫານ ວັນທີ 13 ພະຈິກ 2018.

2 ພື້ນຖານການບັນຊີ

ເອກະສານລາຍງານການເງິນປະຈຳໄຕມາດ ໄດ້ສ້າງຂຶ້ນຕາມນະໂຍບາຍການບັນຊີຂອງກຸ່ມບໍລິສັດ ຕາມທີ່ໄດ້ອະທິບາຍລະອຽດ ໃນໃບລາຍງານທາງການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2017. ເອກະສານລາຍງານການເງິນ ແລະ ບົດອະທິບາຍປະກອບຂໍ້ມູນທາງການເງິນ ໃນເບື້ອງຕົ້ນທີ່ໄດ້ຖືກກະກຽມເປັນຮູບແບບແບບສະຫຼຸບຫຍໍ້. ບໍ່ໄດ້ລວມຂໍ້ມູນ ທັງໝົດທີ່ຈຳເປັນສຳລັບເອກະສານລາຍງານການເງິນປະຈຳປີ. ເຖິງຢ່າງໃດກໍ່ຕາມ, ການເລືອກອະທິບາຍ ໝາຍເຫດປະກອບເອກະສານລາຍງານທີ່ລວມມີການອະທິບາຍເຫດການທີ່ເກີດຂຶ້ນ ແລະ ລາຍການທີ່ມີສາລະສຳຄັນຕໍ່ຄວາມເຂົ້າໃຈໃນການປ່ຽນແປງຖານະການເງິນຂອງກຸ່ມບໍລິສັດ ແລະ ຜົນການດຳເນີນງານຕັ້ງແຕ່ເອກະສານລາຍງານການເງິນປະຈຳປີທີ່ຜ່ານມາ.

ຂໍ້ມູນທາງດ້ານການເງິນກາງປີແບບສະຫຼຸບຫຍໍ້ ຄວນຈະອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2017.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນບໍ່ສະໝ່ຳສະເໝີ ໃນລະຫວ່າງປີການບັນຊີ ຈະມີການຄາດການ ຫຼື ລໍຖ້າຕັດອອກໄປໃນລາຍງານການປີ ສະເພາະກໍລະນີທີ່ເໝາະສົມທີ່ຈະຄາດການ ຫຼື ລໍຖ້າໄລຍະເວລາການຈ່າຍເຫຼົ່ານີ້ ໃນຊ່ວງທ້າຍປີການບັນຊີ.

ຄວາມແຕກຕ່າງ ຢ່າງມີສາລະສຳຄັນລະຫວ່າງນະໂຍບາຍຂອງກຸ່ມບໍລິສັດ ແລະ ມາດຕະຖານການລາຍງານການເງິນສາກົນ ("IFRS") ໃນຂອບເຂດເຫຼົ່ານີ້ທີ່ມີຄວາມແຕກຕ່າງ ຢ່າງມີສາລະສຳຄັນ ເຊັ່ນ: ຊັບສົມບັດຄົງທີ່, ສັນຍາເຊົ່າ, ຜົນປະໂຫຍດຂອງພະນັກງານ, ຜົນກະທົບຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ, ອາກອນກຳໄລ ແລະ ອາກອນກຳໄລເຍື້ອນຊຳລະ, ເຄື່ອງມືທາງການເງິນ, ວິສາຫະກິດຂາຮຸ້ນ, ບໍລິສັດຮຸ້ນສ່ວນ ແລະ ຕົ້ນທຶນກ່ອນການດຳເນີນງານ. ຫຼັກການບັນຊີທີ່ນຳໃຊ້ອາດມີຄວາມແຕກຕ່າງຢ່າງມີສາລະສຳຄັນຈາກຫຼັກການບັນຊີທີ່ຖືກຮັບຮອງເອົາໂດຍທົ່ວໄປ ຊຶ່ງລວມທັງ IFRS ທີ່ນຳໃຊ້ໃນບາງປະເທດ ແລະ ບາງຂອບເຂດ.

ອີງຕາມກົດໝາຍວ່າດ້ວຍການບັນຊີ, ແລະ ລະບຽບການກ່ຽວກັບການບັນຊີ ເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ("PIEs") ໃຫ້ນຳໃຊ້ IFRS. ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນໄດ້ອອກ ແຈ້ງການສະບັບເລກທີ 697/ກງ.ຫກ, ລົງວັນທີ 20 ມີນາ 2017 ("ແຈ້ງການ") ຊຶ່ງໃຫ້ທາງເລືອກກັບ PIEs ໃນການກະກຽມ ວາງແຜນຈັດຕັ້ງປະຕິບັດ ເພື່ອນຳໃຊ້ປະຕິບັດຕາມ IFRS ພາຍໃນໄລຍະເວລາສີ່ປີ. ຜູ້ບໍລິຫານຂອງກຸ່ມກຳລັງກະກຽມແຜນໃນການຈັດຕັ້ງປະຕິບັດຕາມ IFRS ເພື່ອໃຫ້ສອດຄ່ອງກັບແຈ້ງການ.

ໃນການກະກຽມຂໍ້ມູນທາງດ້ານການເງິນລະຫວ່າງປີແບບສະຫຼຸບຫຍໍ້ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການປະເມີນການ ແລະ ຂໍ້ສົມມຸດຖານທີ່ມີຜົນຕໍ່ການລາຍງານຈຳນວນຂອງຊັບສິນ ແລະ ໜີ້ສິນ, ການເປີດເຜີຍຂອງຊັບສິນ ແລະ ໜີ້ສິນ ທີ່ອາດເກີດຂຶ້ນໃນມື້ທີ່ສະແດງຂໍ້ມູນທາງດ້ານການເງິນລະຫວ່າງປີແບບສະຫຼຸບຫຍໍ້ ແລະ ມູນຄ່າຂອງລາຍໄດ້ ແລະ ລາຍຈ່າຍໃນຮອບການລາຍງານ. ເຖິງແມ່ນວ່າການປະເມີນການຢູ່ບົນພື້ນຖານຂອງຄວາມຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ເຫດການທີ່ເກີດຂຶ້ນ ແລະ ຜົນທີ່ເກີດຂຶ້ນຈິງອາດແຕກຕ່າງຈາກທີ່ປະເມີນການໄວ້ໃນເບື້ອງຕົ້ນ.

3 ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ

ສຳລັບຮອບເວລາ ເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ	ບົດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ 2018	2017
		(ລ້ານກີບ)	
ວັນທີ 1 ມັງກອນ		2.606.394	2.297.166
ສ່ວນແບ່ງກຳໄລສຸດທິຂອງວິສາຫະກິດຂາຮຸ້ນ		419.771	267.262
ລາຍໄດ້ເງິນປັນຜົນ		(474.924)	(339.234)
ເພີ່ມຂຶ້ນ		333.500	9.076
ໂອນຈາກການຈ່າຍລ່ວງໜ້າສຳລັບຊັບສິນທີ່ຢູ່ພາຍໃຕ້ ສັນຍາສຳປະທານ ແລະ ເງິນລົງທຶນ	*4*	623.178	-
ສ່ວນຕ່າງຂອງການແປງສະກຸນເງິນ		3.415	571
ວັນທີ 30 ກັນຍາ		**3.511.334**	**2.234.841**

ໃນລະຫວ່າງຮອບເວລາເກົ້າເດືອນສິ້ນສຸດ ວັນທີ 30 ກັນຍາ 2018, ໄດ້ມີການເພີ່ມຂຶ້ນຂອງເງິນລົງທຶນໃນ ວິສາຫະກິດ ຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ດັ່ງຕໍ່ໄປນີ້:

ບໍລິສັດ ໄຟຟ້າ ນ້ຳເທີນ 1 ຈຳກັດ

ບໍລິສັດ ໄດ້ເພີ່ມເງິນລົງທຶນໃນບໍລິສັດ ໄຟຟ້າ ນ້ຳເທີນ 1 ຈຳກັດ, ເປັນຈຳນວນທັງໝົດ 38,59 ລ້ານໂດລາ ຫຼື ທຽບເທົ່າ 319.227 ລ້ານກີບ. ບໍລິສັດຍັງຮັກສາສ່ວນໄດ້ເສຍໃນບໍລິສັດຮຸ້ນສ່ວນຄືເກົ່າ.

ບໍລິສັດ ໄຟຟ້າ ນ້ຳພູນ ຈຳກັດ

ບໍລິສັດ ໄດ້ເພີ່ມເງິນລົງທຶນໃນບໍລິສັດ ໄຟຟ້າ ນ້ຳພູນ ຈຳກັດ, ເປັນຈຳນວນທັງໝົດ 2.177 ລ້ານກີບ. ບໍລິສັດຍັງຮັກສາ ສ່ວນໄດ້ເສຍໃນບໍລິສັດຮຸ້ນສ່ວນຄືເກົ່າ.

ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ

ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ ໄດ້ເພີ່ມທຶນຈົດທະບຽນ ແລະ ບໍລິສັດ ໄດ້ຈ່າຍເງິນລົງທຶນເພີ່ມ ເປັນຈຳນວນລວມ 0,78 ລ້ານໂດລາ ຫຼື ທຽບເທົ່າ 6.559 ລ້ານກີບ. ບໍລິສັດຍັງຮັກສາສ່ວນໄດ້ເສຍໃນບໍລິສັດຮຸ້ນສ່ວນຄືເກົ່າ.

ບໍລິສັດ ນ້ຳລອງພາວເວີ ຈຳກັດ

ໃນລະຫວ່າງປີ 2018, ບໍລິສັດໄດ້ກຳມະສິດຖືຮຸ້ນ 20% ໃນບໍລິສັດ ນ້ຳລອງພາວເວີ ຈຳກັດ ("ວິສາຫະກິດຂາຮຸ້ນ") ຈາກບໍລິສັດແມ່ ຊຶ່ງພິຈາລະນາຈ່າຍເປັນເງິນຈຳນວນ 0,65 ລ້ານໂດລາ ຫຼື ທຽບເທົ່າ 5.537 ລ້ານກີບ. ວິສາຫະກິດຂາ ຮຸ້ນ ດຳເນີນທຸລະກິດໃນການຜະລິດ ແລະ ສົ່ງກະແສໄຟຟ້າ. ໃນວັນທີ 30 ກັນຍາ 2018, ກຳລັງຢູ່ໃນລະຫວ່າງການ ກະກຽມສັນຍາຜູ້ຖືຮຸ້ນໃໝ່ເພື່ອແທນສັນຍາສະບັບເກົ່າ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ບົດອະທິບາຍຊ້ອນທ້າຍປະກອບເອກະສານລາຍງານການເງິນລະຫວ່າງປີແບບສະຫຼຸບຫຍໍ້ ສຳລັບຮອບເວລາລາຍງານສາມເດືອນ ສິ້ນສຸດ ວັນທີ 30 ກັນຍາ 2018 (ກ່ອນກວດສອບ)

ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ

ໃນລະຫວ່າງປີ 2018, 20% ຂອງຮຸ້ນບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ ໄດ້ຖືກໂອນມາໃຫ້ບໍລິສັດ, ໂດຍພິຈາລະນາເປັນເງິນສົດຈຳນວນ 72 ລ້ານໂດລາ ຫຼື ທຽບເທົ່າ 605.016 ລ້ານກີບ, ອີງຕາມສັນຍາການໂອນຮຸ້ນທີ່ເປີດເຜີຍໃນບົດອະທິບາຍ 4. ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ ເປັນເຂື່ອນທີ່ກຳລັງດຳເນີນການກໍ່ສ້າງ. ໃນວັນທີ 30 ກັນຍາ 2018, ກຳລັງຢູ່ໃນລະຫວ່າງການກະກຽມສັນຍາຜູ້ຖືຮຸ້ນໃໝ່ເພື່ອແທນສັນຍາສະບັບເກົ່າ.

ບໍລິສັດ ໄຟຟ້າ ນ້ຳແບ່ງຈຳກັດ

ໃນລະຫວ່າງປີ 2018, 10% ຂອງຮຸ້ນບໍລິສັດ ໄຟຟ້າ ນ້ຳແບ່ງຈຳກັດ ("ວິສາຫະກິດຂາຮຸ້ນ") ໄດ້ຖືກໂອນມາໃຫ້ບໍລິສັດ ໃນຈຳນວນ 18.162 ລ້ານກີບ. ວິສາຫະກິດຂາຮຸ້ນ ດຳເນີນທຸລະກິດໃນການຜະລິດ ແລະ ສົ່ງກະແສໄຟຟ້າ. ໃນວັນທີ 30 ກັນຍາ 2018, ກຳລັງຢູ່ໃນລະຫວ່າງການກະກຽມສັນຍາຜູ້ຖືຮຸ້ນໃໝ່ເພື່ອແທນສັນຍາສະບັບເກົ່າ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ບົດອະທິບາຍຊ້ອນທ້າຍປະກອບເອກະສານລາຍງານການເງິນລະຫວ່າງປີແບບສະຫຼຸບຫຍໍ້
ສຳລັບຮອບເວລາລາຍງານສາມເດືອນ ສິ້ນສຸດ ວັນທີ 30 ກັນຍາ 2018 (ກ່ອນກວດສອບ)

ເງິນລົງທຶນໃນ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນໃນວັນທີ 30 ກັນຍາ 2018 ແລະ 31 ທັນວາ 2017 ແລະ ເງິນປັນຜົນຈາກການລົງທຶນ ສຳລັບເກົ້າເດືອນສິ້ນສຸດວັນທີ 30 ກັນຍາ 2018 ແລະ 2017 ມີ ດັ່ງນີ້:

				ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ									
	ອັດຕາສ່ວນເງິນລົງທຶນ			ມູນຄ່າ		ຄ່າເສື່ອມມູນຄ່າ		ມູນຄ່າສຸດທິ		ທຶນ		ລາຍໄດ້ເງິນປັນຜົນ	
	30 ກັນຍາ 2018	31 ທັນວາ 2017	ປະເພດ ທຸລະກິດ	30 ກັນຍາ 2018	31 ທັນວາ 2017	30 ກັນຍາ 2018	31 ທັນວາ 2017	30 ກັນຍາ 2018	31 ທັນວາ 2017	30 ກັນຍາ 2018	31 ທັນວາ 2017	30 ກັນຍາ 2018	30 ກັນຍາ 2017
	(%)								(ລ້ານກີບ)				
ວິສາຫະກິດຂາຮຸ້ນ													
ບໍລິສັດ ໄຟຟ້າ ນ້ຳງື່ມ 2 ຈຳກັດ ("ນ້ຳງື່ມ 2")	25	25	ຜະລິດໄຟຟ້າ	454.742	454.742	-	-	454.742	454.742	475.397	422.953	23.412	64.170
ບໍລິສັດ ໄຟຟ້າ ນ້ຳລີກ 1-2 ຈຳກັດ ("ນ້ຳລີກ 1-2")	10	10	ຜະລິດໄຟຟ້າ	32.240	32.240	-	-	32.240	32.240	67.835	75.675	15.309	-
ບໍລິສັດ ໄຟຟ້າ ນ້ຳງື່ມ 5 ຈຳກັດ ("ນ້ຳງື່ມ 5")	15	15	ຜະລິດໄຟຟ້າ	80.022	80.022	-	-	80.022	80.022	99.422	95.299	-	-
ບໍລິສັດ ໄຟຟ້າ ນ້ຳເທີນ 1 ຈຳກັດ ("ນ້ຳເທີນ 1")	15	15	ຜະລິດໄຟຟ້າ	497.163	177.936	-	-	497.163	177.936	492.158	175.565	-	-
ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ ("ດອນສະໂຮງ")	20	-	ຜະລິດໄຟຟ້າ	605.016	-	-	-	605.016	-	605.016	-	-	-
ບໍລິສັດ ໄຟຟ້າ ນ້ຳແບ່ງ ຈຳກັດ ("ນ້ຳແບ່ງ")	10	-	ຜະລິດໄຟຟ້າ	18.162	-	-	-	18.162	-	18.162	-	-	-
ບໍລິສັດ ໄຟຟ້າ ນ້ຳລອງ ຈຳກັດ ("ນ້ຳລອງ")	20	-	ຜະລິດໄຟຟ້າ	5.537	-	-	-	5.537	-	5.537	-	-	-
ລວມ				**1.692.882**	**744.940**	-	-	**1.692.882**	**744.940**	**1.763.527**	**769.492**	**38.721**	**64.170**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ບົດອະທິບາຍຊ້ອນທ້າຍປະກອບເອກະສານລາຍງານການເງິນລະຫວ່າງປີແບບສະຫຼຸບຫຍໍ້

ສຳລັບຮອບເວລາລາຍງານສາມເດືອນ ສິ້ນສຸດ ວັນທີ 30 ກັນຍາ 2018 (ກ່ອນກວດສອບ)

	ອັດຕາສ່ວນເງິນລົງທຶນ			ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ									
				ມູນຄ່າ		ຄ່າເສື່ອມມູນຄ່າ		ມູນຄ່າສຸດທິ		ທຶນ		ລາຍໄດ້ເງິນປັນຜົນ	
	30 ກັນຍາ 2018	31 ທັນວາ 2017	ປະເພດ ທຸລະກິດ	30 ກັນຍາ 2018	31 ທັນວາ 2017	30 ກັນຍາ 2018	31 ທັນວາ 2017	30 ກັນຍາ 2018	31 ທັນວາ 2017	30 ກັນຍາ 2018	31 ທັນວາ 2017	30 ກັນຍາ 2018	30 ກັນຍາ 2017
	(%)								(ລ້ານກີບ)				
ບໍລິສັດຮຸ່ນລ່ອນ													
ບໍລິສັດ ເທີນຫີນບຸນ ພາວເວີ ຈຳກັດ ("THPC")	60	60	ຜະລິດໄຟຟ້າ	1.120.696	1.120.696	-	-	1.120.696	1.120.696	1.666.458	1.758.512	424.425	265.207
ບໍລິສັດ ຫ້ວຍເຫາະ ພາວເວີ ຈຳກັດ ("HHPC")	20	20	ຜະລິດໄຟຟ້າ	1.171	1.171	-	-	1.171	1.171	14.996	16.972	11.778	9.857
ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ ("LHPC")	60	60	ຜະລິດໄຟຟ້າ	16.319	9.760	-	-	16.319	9.760	11.713	6.448	-	-
ບໍລິສັດ ນ້ຳດີກ 1 ພາວເວີ ຈຳກັດ ("ນ້ຳດີກ 1")	70	70	ຜະລິດໄຟຟ້າ	54.942	54.942	-	-	54.942	54.942	53.463	54.130	-	-
ບໍລິສັດ ເຂື່ອນໄຟຟ້າ ນ້ຳພຸນ ຈຳກັດ ("NPPC")	51	51	ຜະລິດໄຟຟ້າ	3.414	1.237	-	-	3.414	1.237	1.177	840	-	-
ລວມ				**1.196.542**	**1.187.806**	-	-	**1.196.542**	**1.187.806**	**1.747.807**	**1.836.902**	**436.203**	**275.064**
ລວມວິສາຫະກິດຂາຮຸ່ນ ແລະ ບໍລິສັດຮຸ່ນລ່ອນ				**2.889.424**	**1.932.746**	-	-	**2.889.424**	**1.932.746**	**3.511.334**	**2.606.394**	**474.924**	**339.234**

ໃນສ່ວນທີ່ກ່ຽວຂ້ອງກັບບໍລິສັດ ນ້ຳລີກ 1-2, ນ້ຳງື່ມ 5, ແລະ ນ້ຳເທີນ 1, ບໍລິສັດມີສິດໃນການອອກຄະແນນສຽງ ແລະ ທີ່ນັ່ງໃນສະພາບໍລິຫານ ແລະ ສາມາດຕັດສິນໃຈໃນເລື່ອງການເງິນ ແລະ ການດຳເນີນງານ (ແຕ່ບໍ່ເທົ່າກັບພາກສ່ວນທີ່ມີການຄວບຄຸມຮ່ວມກັນ). ຕາມທີ່ໄດ້ລະບຸໄວ້ໃນສັນຍາທີ່ກ່ຽວຂ້ອງກັບຜູ້ຖືຮຸ້ນ. ຜູ້ບໍລິຫານຈຶ່ງສາມາດສະຫຼຸບໄດ້ວ່າເປັນການລົງທຶນໃນວິສາຫະກິດຮ່ວມ.

ໃນສ່ວນທີ່ກ່ຽວຂ້ອງກັບ ບໍລິສັດ ເທີນຫີນບຸນ (THPC), ຫ້ວຍເຫາະ (HHPC), ຫ້ວຍລຳພັນຕອນລຸ່ມ (LHPC), ນ້ຳດິກ 1 (Nam Dik 1) ແລະ ນ້ຳພຸນ (NPPC), ເຖິງແມ່ນວ່າບໍລິສັດ ມີຮຸ້ນສ່ວນຢູ່ໃນບໍລິສັດເຫຼົ່ານັ້ນຫຼາຍກວ່າ ຫຼື ໜ້ອຍກວ່າ 50% ກໍ່ຕາມ, ແຕ່ອີງຕາມເງື່ອນໄຂຂອງຂໍ້ຕົກລົງບໍລິສັດຮຸ້ນສ່ວນ ແມ່ນໄດ້ລົງມະຕິຄະແນນສຽງ ແລະ ທີ່ນັ່ງໃນສະພາບໍລິຫານ ແລະ ສາມາດຕັດສິນໃຈໃນເລື່ອງການເງິນ ແລະ ການດຳເນີນງານ (ແຕ່ບໍ່ຫຼາຍເທົ່າບຸກຄົນທີ່ມີອຳນາດຄວບຄຸມທັງໝົດ). ຜູ້ບໍລິຫານຈຶ່ງສາມາດສະຫຼຸບໄດ້ວ່າ ເງິນລົງທຶນເຫຼົ່ານີ້ເປັນເງິນລົງທຶນໃນບໍລິສັດຮຸ້ນສ່ວນ.

ວິສາຫະກິດຮ່ວມ ແລະ ບໍລິສັດຮຸ້ນສ່ວນ ຂອງບໍລິສັດຍັງບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ສະນັ້ນຈຶ່ງບໍ່ມີການເຜີຍແຜ່ລາຄາອ້າງອີງ.

4 ເງິນຈ່າຍລ່ວງໜ້າສຳລັບຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ

	ບົດ ອະທິບາຍ	ເອກະສານລາຍງານການ ເງິນແບບລວມ 2018	2017	ເອກະສານລາຍງານການ ເງິນແບບແຍກ 2018	2017
			(ລ້ານກີບ)		
ວັນທີ 1 ມັງກອນ		4.436.159	3.133.596	5.101.121	3.133.596
ເພີ່ມຂຶ້ນ		2.488.999	825.300	2.614.413	825.300
ຫຼຸດລົງ		(23.976)	-	(23.976)	-
ໂອນຈາກການລົງທຶນໃນວິສາຫະກິດ ຮ່ວມ ແລະ ບໍລິສັດຮຸ້ນສ່ວນ	3	(623.178)	-	(623.178)	-
ລາຍຈ່າຍທາງການເງິນ		10.416	9.017	10.416	9.017
ສ່ວນຕ່າງຂອງການແປງສະກຸນເງິນ		-	-	11.156	-
ວັນທີ 30 ກັນຍາ		**6.288.420**	**3.967.913**	**7.089.952**	**3.967.913**

ເງິນລົງທຶນຈ່າຍລ່ວງໜ້າ ໃນວັນທີ 30 ກັນຍາ 2018 ແລະ 31 ທັນວາ 2017 ມີດັ່ງນີ້:

	ປະເພດ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		30 ກັນຍາ 2018	31 ທັນວາ 2017	30 ກັນຍາ 2018	31 ທັນວາ 2017
		(ລ້ານກີບ)		*(ລ້ານກີບ)*	
ນ້ຳບີ	ບໍລິສັດລູກ	-	-	455.471	363.668
ອີດີແອວ-ເຈັນ ໂຊລ່າ	ບໍລິສັດລູກ	-	-	346.061	301.294
ນ້ຳຄານ 3	ຊັບສິນ	325.832	315.416	325.832	315.416
ນ້ຳຈຽນ 1	ຊັບສິນ	678.504	678.504	678.504	678.504
ນ້ຳຫີນບຸນ	ຊັບສິນ	205.955	205.955	205.955	205.955
ເຊເສັດ 3	ຊັບສິນ	149.418	149.418	149.418	149.418
ນ້ຳງື່ມ 1 Ext DFE	ຊັບສິນ	488.494	488.494	488.494	488.494
ນ້ຳງື່ມ 1 Ext Unit 6	ຊັບສິນ	242.231	242.231	242.231	242.231
ນ້ຳອູ 2,5,6	IPP	364.640	364.640	364.640	364.640
ນ້ຳງຽບ 2	IPP	111.470	111.470	111.470	111.470
ນ້ຳແບ່ງ	IPP	-	42.138	-	42.138
ເຊຊະໝານ 3	IPP	232.163	232.163	232.163	232.163
ນ້ຳລີກ 1	IPP	34.680	34.680	34.680	34.680
ນ້ຳມັງ 1	IPP	37.596	37.596	37.596	37.596
ນ້ຳທາ 1	IPP	244.474	244.474	244.474	244.474
ໄຊຍະບຸລີ ແລະ ດອນສະໂຮງ	IPP	3.172.963	1.288.980	3.172.963	1.288.980
ລວມ		**6.288.420**	**4.436.159**	**7.089.952**	**5.101.121**

ສັນຍາການໂອນຮຸ້ນ ("ສັນຍາ") ຂອງບໍລິສັດ ໄຟຟ້າ ນ້ຳແບ່ງ ຈຳກັດ

ໃນວັນທີ 26 ມີນາ 2018, ບໍລິສັດ ແລະ ຟຟລ ໄດ້ລົງນາມໃນສັນຍາ ສຳລັບການໂອນຮຸ້ນໃນບໍລິສັດ ໄຟຟ້າ ນ້ຳແບ່ງ ຈຳກັດ.

ພາຍໃຕ້ສັນຍານີ້ ຟຟລ ເຫັນດີທີ່ຈະໂອນຮຸ້ນ 10% ໃນບໍລິສັດ ໄຟຟ້ານ້ຳແບ່ງ ຈຳກັດ ໃຫ້ກັບບໍລິສັດ ໃນຈຳນວນ 2,3 ລ້ານ ໂດລາ ຫຼື ທຽບເທົ່າ 18.162 ລ້ານກີບ, ຫຼັງຈາກຫັກລົບກັບເງິນລົງທຶນຈ່າຍລ່ວງໜ້າ, ຟຟລ ຈະຕ້ອງຈ່າຍເງິນຄືນໃຫ້ບໍລິສັດ ເປັນຈຳນວນ 2,9 ລ້ານໂດລາ ທຽບເທົ່າ 23.976 ລ້ານກີບ. ໃນວັນທີ 30 ກັນຍາ 2018, ເງິນລົງທຶນໃນບໍລິສັດ ໄຟຟ້ານ້ຳແບ່ງ ຈຳກັດ. ໄດ້ຖືກໂອນໄປຍັງເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ທີ່ເປີດເຜີຍໃນບົດອະທິບາຍ 3.

ສັນຍາການໂອນຮຸ້ນ ("ສັນຍາ") ຂອງບໍລິສັດ ໄຟຟ້າ ໄຊຍະບູລີ ຈຳກັດ ແລະ ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ.

ໃນວັນທີ 11 ມິຖຸນາ 2018, ບໍລິສັດ ແລະ ຟຟລ ໄດ້ເຊັນສັນຍາການໂອນຮຸ້ນໃນບໍລິສັດ ໄຟຟ້າ ໄຊຍະບູລີ ຈຳກັດ ແລະ ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ.

ພາຍໃຕ້ສັນຍາການໂອນຮຸ້ນ, ຟຟລ ໄດ້ຕົກລົງໂອນຮຸ້ນຈຳນວນ 20% ຂອງບໍລິສັດ ໄຟຟ້າ ໄຊຍະບູລີ ຈຳກັດ ແລະ 20% ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ, ໃຫ້ບໍລິສັດ ໃນມູນຄ່າ 450 ລ້ານໂດລາ. ໃນລະຫວ່າງ 2018, ຮຸ້ນໃນບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ ໄດ້ຖືກໂອນໃຫ້ກັບບໍລິສັດແລ້ວ ເປີດເຜີຍໃນບົດອະທິບາຍ 3. ສ່ວນທີ່ເຫຼືອ ຈຳນວນ 378 ລ້ານໂດລາ ຫຼື ທຽບເທົ່າ 3.172.963 ລ້ານກີບ ໄດ້ຖືກນຳສະເໜີເປັນເງິນລົງທຶນຈ່າຍລ່ວງໜ້າ ໃນບໍລິສັດ ໄຟຟ້າ ໄຊຍະບູລີ ຈຳກັດ.

5 ຊັບສິນພາຍໃຕ້ສັນຍາສຳປະທານ

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
ຮອບເວລາ ເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ	2018	2017	2018	2017
		(ລ້ານກີບ)		
ວັນທີ 1 ມັງກອນ	9.790.198	9.435.337	9.408.829	9.412.504
ເພີ່ມຂຶ້ນ	448.040	387.484	388.741	275.244
ຫັກຄ່າຫຼ້ຍຫ້ຽນ	(324.490)	(312.574)	(317.751)	(311.739)
ວັນທີ 30 ກັນຍາ	**9.913.748**	**9.510.247**	**9.479.819**	**9.376.009**

6 ໜີ້ຕ້ອງຮັບຈາກລູກໜີ້ການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

		ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນແບບແຍກ	
	ບົດ ອະທິບາຍ	30 ກັນຍາ 2018	31 ທັນວາ 2017	30 ກັນຍາ 2018	31 ທັນວາ 2017
			(ລ້ານກີບ)		
ໜີ້ຕ້ອງຮັບການຄ້າຈາກ ພາກສ່ວນທີ່ກ່ຽວຂ້ອງ	*12*	958.610	142.172	946.416	137.316
ໜີ້ຕ້ອງຮັບອື່ນໆຈາກ ພາກສ່ວນທີ່ກ່ຽວຂ້ອງ	*12*	79.310	2.140	79.798	2.142
ອື່ນໆ		2.160	5.140	2.160	5.140
ລວມ		**1.040.080**	**149.452**	**1.028.374**	**144.598**

7 ເງິນກູ້

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	30 ກັນຍາ 2018	31 ທັນວາ 2017
	(ລ້ານກີບ)	
ເງິນກູ້ຢືມໄລຍະສັ້ນ	113.701	870.573
ເງິນກູ້ຢືມໄລຍະຍາວ - ຈັດເປັນໄລຍະສັ້ນ		
- ເງິນກູ້ຢືມໄລຍະຍາວ ຈາກພາກສ່ວນທີ່ກ່ຽວຂ້ອງ	456.849	442.848
- ເງິນກູ້ຢືມໄລຍະຍາວ ຈາກສະຖາບັນການເງິນ	129.104	87.064
ລວມໜີ້ສິນທີ່ມີພາລະດອກເບ້ຍ ໄລຍະສັ້ນ	**699.654**	**1.400.485**
ເງິນກູ້ຢືມໄລຍະຍາວ - ຈັດເປັນໄລຍະຍາວ		
- ເງິນກູ້ຢືມໄລຍະຍາວ ຈາກພາກສ່ວນທີ່ກ່ຽວຂ້ອງ	3.530.067	3.710.946
- ເງິນກູ້ຢືມໄລຍະຍາວ ຈາກສະຖາບັນການເງິນ	325.660	499.590
ຫັກ: ຕົ້ນທຶນຄ່າທຳນຽມເງິນກູ້ລໍຖ້າຕັດບັນຊີ	(4.621)	(4.188)
ລວມໜີ້ສິນທີ່ມີພາລະດອກເບ້ຍ ໄລຍະຍາວ	**3.851.106**	**4.206.348**
ລວມໜີ້ສິນທີ່ມີພາລະດອກເບ້ຍ	**4.550.760**	**5.606.833**

ການເຄື່ອນໄຫວເງິນກູ້ຢືມໄລຍະຍາວ ສຳລັບ ໄລຍະເວລາເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2018 ແລະ 2017 ມີດັ່ງນີ້:

ຮອບເວລາ ເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	2018	2017
	(ລ້ານກີບ)	
ວັນທີ 1 ມັງກອນ	5.606.833	1.508.783
ເພີ່ມຂຶ້ນ	484.431	3.656.349
ຈ່າຍເງິນຄືນ	(1.669.598)	(304.814)
ຜົນກະທົບຈາກການແລກປ່ຽນເງິນຕາ	129.527	56.610
ປ່ຽນແປງສຸດທິໃນຕົ້ນທຶນເງິນກູ້ລໍຖ້າຕັດບັນຊີ	(433)	(2.576)
ວັນທີ 30 ກັນຍາ	**4.550.760**	**4.914.352**

ສັນຍາກູ້ຢືມໄລຍະສັ້ນ

ໃນລະຫວ່າງໄລຍະເວລາເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2018, ບໍລິສັດໄດ້ຮັບເງິນກູ້ເພີ່ມຈາກທະນາຄານ ຫວຽດຕິນ ລາວ ຈຳກັດ ເປັນຈຳນວນ 18,11 ລ້ານໂດລາ ຫຼື ທຽບເທົ່າ 151.991 ລ້ານກີບ.

ສັນຍາເງິນກູ້ຢືມໄລຍະຍາວ

ໃນວັນທີ 20 ທັນວາ 2017, ບໍລິສັດໄດ້ເຊັນສັນຍາສິນເຊື່ອ ກັບທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ ("ICBC") ສຳລັບສິນເຊື່ອ ຈຳນວນ 40 ລ້ານໂດລາ ເພື່ອໃຊ້ເປັນເງິນທຶນໝຸນວຽນເພີ່ມເຕີມ. ເງິນກູ້ຢືມນີ້ ມີອັດຕາດອກເບ້ຍ LIBOR 6 ເດືອນ +3,20% ຊຶ່ງປະກອບດ້ວຍວົງເງິນທີ 1 ຈຳນວນ 30 ລ້ານໂດລາ ແລະ ວົງເງິນທີ 2 ຈຳນວນ 10 ລ້ານໂດລາ. ເມື່ອວັນທີ 2 ມັງກອນ 2018 ບໍລິສັດໄດ້ຮັບເງິນຈາກທັງວົງເງິນ 1 ແລະ 2 ເປັນຈຳນວນເງິນລວມ 40 ລ້ານໂດລາ ທຽບເທົ່າ 332.440 ລ້ານກີບ ແລະ ຈະຄົບສັນຍາເງິນກູ້ພາຍໃນ 3 ປີ ຫຼັງຈາກຖອນເງິນ.

8 ຮຸ້ນກູ້

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	30 ກັນຍາ 2018	31 ທັນວາ 2017
	(ລ້ານກີບ)	
ຮຸ້ນກູ້	8.064.403	4.222.933
ລາຍຈ່າຍໃນການດຳເນີນງານ	(130.387)	(70.051)
ສຸດທິ	**7.934.016**	**4.152.882**

ການເຄື່ອນໄຫວໃນຮຸ້ນກູ້ ສຳລັບຮອບໄລຍະເວລາ ເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2018 ແລະ 2017 ມີດັ່ງຕໍ່ໄປນີ້:

ຮອບເວລາ ເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	2018	2017
	(ລ້ານກີບ)	
ໃນວັນທີ 1 ມັງກອນ	4.152.882	3.985.936
ເພີ່ມຂຶ້ນ	3.532.989	-
ຕັດຈຳໜ່າຍຕົ້ນທຶນທາງການເງິນລໍຖ້າຕັດຈ່າຍ	6.326	4.833
ຜົນກະທົບຈາກການແລກປ່ຽນເງິນຕາ	241.819	162.760
ໃນວັນທີ 30 ກັນຍາ	**7.934.016**	**4.153.529**

ໃນວັນທີ 13 ກໍລະກົດ 2018, ບໍລິສັດໄດ້ອອກ ແລະ ສະເໜີຂາຍຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ ("ຮຸ້ນກູ້") ໃນປະເທດໄທ ໂດຍສະເໜີຂາຍໃຫ້ແກ່ບຸກຄົນໃນວົງຈຳກັດ ໃຫ້ແກ່ນັກລົງທຶນຊຶ່ງມີມູນຄ່າສູງ ແລະ ສະຖາບັນນັກລົງທຶນ, ເປັນຈຳນວນເງິນ 13.660,4 ລ້ານບາດ. ຮຸ້ນກູ້ມີອັດຕາດອກເບ້ຍຄົງທີ່ ແລະ ຈ່າຍດອກເບ້ຍທຸກເຄິ່ງປີ ໃນວັນທີ 13 ມັງກອນ ແລະ 13 ກໍລະກົດ, ໂດຍຊຳລະຄືນເມື່ອຄົບກຳນົດ.

ສັງລວມຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນ ຂອງຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ ໃນວັນທີ 30 ກັນຍາ 2018 ມີດັ່ງລຸ່ມນີ້:

	ຈຳນວນ (ລ້ານ)	ອັດຕາດອກເບ້ຍ(% p.a.)	ປີ	ດອກເບ້ຍຈ່າຍ	ວັນຄົບກຳນົດ
2014-ຮຸ່ນແບບ 1	1.500,0 ບາດ	4,95%	5	ທຸກເຄິ່ງປີ	12 ທັນວາ 2019
2014-ຮຸ່ນແບບ 2	2.000,0 ບາດ	5,20%	7	ທຸກເຄິ່ງປີ	12 ທັນວາ 2021
2014-ຮຸ່ນແບບ 3	3.000,0 ບາດ	5,45%	10	ທຸກເຄິ່ງປີ	12 ທັນວາ 2024
2016-ຮຸ່ນແບບ 1	51,0 ໂດລາ	5,00%	7	ທຸກເຄິ່ງປີ	2 ກັນຍາ 2023
2016-ຮຸ່ນແບບ 2	166,0 ໂດລາ	5,59%	10	ທຸກເຄິ່ງປີ	2 ກັນຍາ 2026
2016-ຮຸ່ນແບບ 3	95,0 ໂດລາ	5,98%	12	ທຸກເຄິ່ງປີ	2 ກັນຍາ 2028
2018-ຮຸ່ນແບບ 1	3.810,3 ບາດ	3,90%	3	ທຸກເຄິ່ງປີ	13 ກໍລະກົດ 2021
2018-ຮຸ່ນແບບ 2	4.078,1 ບາດ	4,50%	5	ທຸກເຄິ່ງປີ	13 ກໍລະກົດ 2023
2018-ຮຸ່ນແບບ 3	1.443,1 ບາດ	4,85%	7	ທຸກເຄິ່ງປີ	13 ກໍລະກົດ 2025
2018-ຮຸ່ນແບບ 4	1.897,9 ບາດ	5,50%	10	ທຸກເຄິ່ງປີ	13 ກໍລະກົດ 2028
2018-ຮຸ່ນແບບ 5	809,8 ບາດ	6,00%	12	ທຸກເຄິ່ງປີ	13 ກໍລະກົດ 2030
2018-ຮຸ່ນແບບ 6	1.621,2 ບາດ	6,25%	15	ທຸກເຄິ່ງປີ	13 ກໍລະກົດ 2033

9 ຕາສານອານຸພັນ

(ກ) ສັນຍາແລກປ່ຽນເງິນຕາຕ່າງປະເທດ swap

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	30 ກັນຍາ 2018	31 ທັນວາ 2017
	(ລ້ານກີບ)	
ໜີ້ຕ້ອງຮັບສັນຍາແລກປ່ຽນເງິນຕາ Swap	1.737.125	1.650.805
ໜີ້ຕ້ອງສົ່ງສັນຍາແລກປ່ຽນເງິນຕາ Swap	(1.682.888)	(1.642.584)
ສ່ວນຕ່າງກຳໄລສັນຍາແລກປ່ຽນເງິນຕາ Swap	(10.220)	(12.077)
ໜີ້ຕ້ອງຮັບ (ໜີ້ຕ້ອງສົ່ງ) ສັນຍາແລກປ່ຽນເງິນຕາ Swap ສຸດທິ	**44.017**	**(3.856)**

ສັງລວມເງື່ອນໄຂຂອງສັນຍາແລກປ່ຽນເງິນຕາຕ່າງປະເທດ ທີ່ສຳຄັນມີດັ່ງນີ້:

ຈຳນວນທີ່ອອກຮຸ້ນກູ້ (ລ້ານບາດ)	Swap ຈຳນວນ (ລ້ານໂດລາ)	ໄລຍະການຊຳລະເງິນ	ອັດຕາດອກເບ້ຍທີ່ແທ້ຈິງ	ອັດຕາ Swap	ໄລຍະການຊຳລະເງິນ
1.500	45,59	ທັນວາ 2019	4,95%	Libor 6 ເດືອນ+3,36%	ທຸກເຄິ່ງປີຈາກ ມິຖຸນາ 2015 ເຖິງ ທັນວາ 2019
2.000	60,79	ທັນວາ 2021	5,20%	Libor 6 ເດືອນ+3,61%	ທຸກເຄິ່ງປີຈາກ ມິຖຸນາ 2015 ເຖິງ ທັນວາ 2021
3.000	91,18	ທັນວາ 2024	5,45%	Libor 6 ເດືອນ+3,795%	ທຸກເຄິ່ງປີຈາກ ມິຖຸນາ 2015 ເຖິງ ທັນວາ 2024

(ຂ) ສັນຍາແລກປ່ຽນອັດຕາດອກເບ້ຍ collar

ໃນລະຫວ່າງປີ 2017, ບໍລິສັດໄດ້ເຮັດສັນຍາປ້ອງກັນຄວາມສ່ຽງຈາກອັດຕາດອກເບ້ຍ collar ກັບ ສະຖາບັນ ການເງິນໄທ. ໂດຍມີຈຸດປະສົງ ເພື່ອບໍລິຫານຄວາມສ່ຽງ ຈາກຄວາມຜັນຜວນ ຂອງອັດຕາດອກເບ້ຍຂອງຮຸ້ນກູ້. ໂດຍມີວົງເງິນບໍ່ເກີນ 198 ລ້ານໂດລາ ຫຼື ທຽບເທົ່າ 1.642.584 ລ້ານກີບ ເຊິ່ງມີອັດຕາດອກເບ້ຍອ້າງອີງຄື LIBOR 6 ເດືອນ ("LIBOR") ໂດຍບໍລິສັດຈະຈ່າຍ ແລະ ຮັບດອກເບ້ຍ ຕາມທີ່ລະບຸໄວ້ໃນສັນຍາເປັນສອງຄັ້ງຕໍ່ປີ. ສັນຍາຈະໝົດອາຍຸລົງຈາກເດືອນ ທັນວາ 2019 ເຖິງ ທັນວາ 2021. ຄູ່ສັນຍາຮຽກຮ້ອງໃຫ້ບໍລິສັດຈ່າຍເງິນລ່ວງໜ້າ ເຊິ່ງຈະຊຳລະຕາມວັນທີຊຳລະບັນຊີ.

10 ກຳໄລ(ຂາດທຶນ)ພື້ນຖານຕໍ່ຮຸ້ນ

ການຄຳນວນກຳໄລ(ຂາດທຶນ)ພື້ນຖານຕໍ່ຮຸ້ນ ສຳລັບຮອບເວລາສາມເດືອນ ສິ້ນສຸດ ໃນວັນທີ 30 ກັນຍາ 2018 ແລະ 2017 ແມ່ນຄິດໄລ່ກຳໄລສຸດທິໃນຮອບເວລາທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງກຸ່ມບໍລິສັດ ແລະ ຈຳນວນຮຸ້ນສາມັນສະເລ່ຍທີ່ອອກຈຳໜ່າຍລະຫວ່າງ ໄລຍະເວລາ ດັ່ງນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2018	2017	2018	2017
ກຳໄລ(ຂາດທຶນ)ທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນ ຂອງບໍລິສັດ *(ລ້ານກີບ)*	(80.768)	229.272	(77.973)	228.990
ຈຳນວນຮຸ້ນທີ່ອອກຈຳໜ່າຍ *(ລ້ານຮຸ້ນ)*	1.679	1.679	1.679	1.679
ກຳໄລ(ຂາດທຶນ)ພື້ນຖານຕໍ່ຮຸ້ນ *(ກີບ)*	**(48,10)**	**136,55**	**(46,44)**	**136,38**

11 ເງິນປັນຜົນ

ກອງປະຊຸມສະພາບໍລິຫານສະໄໝສາມັນຈັດຂຶ້ນໃນວັນທີ 22 ສິງຫາ 2018, ມີມັດຕິອະນຸມັດການຈ່າຍເງິນປັນຜົນລະຫວ່າງການປີ ສຳລັບຜົນກຳໄລສຸດທິ ສຳລັບໄລຍະເວລາຫົກເດືອນ ແຕ່ວັນທີ 1 ມັງກອນ ຫາ 31 ມິຖຸນາ 2018 ເປັນຈຳນວນ 110 ກີບຕໍ່ຮຸ້ນ ລວມເປັນເງິນທັງໝົດ 184.723 ລ້ານກີບ. ເງິນປັນຜົນແມ່ນໄດ້ເບີກຈ່າຍບາງສ່ວນໃນຊ່ວງເດືອນຕຸລາ 2018.

ກອງປະຊຸມສະພາບໍລິຫານສະໄໝສາມັນຈັດຂຶ້ນໃນວັນທີ 23 ສິງຫາ 2017, ມີມັດຕິອະນຸມັດການຈ່າຍເງິນປັນຜົນລະຫວ່າງການປີ ສຳລັບຜົນກຳໄລສຸດທິ ສຳລັບໄລຍະເວລາຫົກເດືອນ ແຕ່ວັນທີ 1 ມັງກອນ ຫາ 31 ມິຖຸນາ 2017 ເປັນຈຳນວນ 110 ກີບຕໍ່ຮຸ້ນ ລວມເປັນເງິນທັງໝົດ 184.723 ລ້ານກີບ. ເງິນປັນຜົນແມ່ນໄດ້ເບີກຈ່າຍບາງສ່ວນໃນຊ່ວງເດືອນຕຸລາ 2017.

12 ພາກສ່ວນທີ່ກ່ຽວຂ້ອງ

ສຳລັບຈຸດປະສົງຂອງເອກະສານລາຍງານການເງິນເຫຼົ່ານີ້, ພາກສ່ວນທີ່ໄດ້ຮັບການພິຈາລະນາ ວ່າກ່ຽວຂ້ອງກັບກຸ່ມບໍລິສັດ, ຖ້າກຸ່ມບໍລິສັດມີຄວາມສາມາດ, ທາງກົງ ຫຼື ທາງອ້ອມ, ທີ່ຈະຄວບຄຸມ ຫຼື ເຂົ້າຮ່ວມຄວບຄຸມພາກສ່ວນ ຫຼື ໃຊ້ອິດທິພົນທີ່ສຳຄັນ ນອກເໜືອຈາກພາກສ່ວນໃນການສ້າງເອກະສານລາຍງານການເງິນ ແລະ ການຕັດສິນໃຈໃນການດຳເນີນງານ ຫຼື ນອກເໜືອໄປຈາກນີ້ ຫຼື ໃນກໍລະນີກຸ່ມບໍລິສັດ ແລະ ພາກສ່ວນຈະຢູ່ພາຍໃຕ້ການຄວບຄຸມດຽວກັນ ຫຼື ພາຍໃຕ້ອິດທິພົນທີ່ສຳຄັນ. ກິດຈະການທີ່ກ່ຽວຂ້ອງອາດຈະເປັນນິຕິບຸກຄົນ ຫຼື ສຳນັກງານຕ່າງໆ.

ຊື່ຂອງສຳນັກງານ	ສ້າງຕັ້ງຂຶ້ນໃນປະເທດ/ສັນຊາດ	ລັກສະນະຄວາມສຳພັນ
ລັດວິສາຫະກິດ ໄຟຟ້າລາວ	ສປປ ລາວ	ບໍລິສັດແມ່
ບໍລິສັດ ນ້ຳບີ ພາວເວີ້ ຈຳກັດ	ສປປ ລາວ	ບໍລິສັດລູກ
ບໍລິສັດ ອີດີເອວເຈນ ໂຊ່ລ່າ ພາວເວີ້ ຈຳກັດ	ສປປ ລາວ	ບໍລິສັດລູກ
ບໍລິສັດ ຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ຜ-ຟຟລ ຈຳກັດ	ສປປ ລາວ	ບໍລິສັດລູກ
ບໍລິສັດ ໄຟຟ້າ ນ້ຳລີກ 1-2 ຈຳກັດ	ສປປ ລາວ	ວິສາຫະກິດຂາຮຸ້ນ
ບໍລິສັດ ໄຟຟ້າ ເຫີນຫີນບຸນ ຈຳກັດ	ສປປ ລາວ	ບໍລິສັດຮຸ້ນສ່ວນ

ນະໂຍບາຍການກຳນົດລາຄາໂດຍສະເພາະການດຳເນີນງານສຳລັບແຕ່ລະລາຍການເປັນໄປດັ່ງນີ້:

ລາຍການ	ນະໂຍບາຍລາຄາ
ຂາຍໄຟຟ້າ	ລາຄາຕາມສັນຍາ
ລາຍຈ່າຍດອກເບ້ຍ	ອັດຕາດອກເບ້ຍຕາມສັນຍາ
ລາຍຮັບດອກເບ້ຍ	ອັດຕາດອກເບ້ຍຕາມສັນຍາ

ລາຍການເຄື່ອນໄຫວທີ່ສຳຄັນສຳລັບໄລຍະເວລາສາມເດືອນ ສິ້ນສຸດວັນທີ 30 ກັນຍາ 2018 ແລະ 2017 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2018	2017	2018	2017
	(ລ້ານກີບ)			
ບໍລິສັດແມ່				
ຂາຍກະແສໄຟຟ້າ	372.481	402.187	367.222	401.584
ລາຍຈ່າຍດອກເບ້ຍ	49.600	52.465	49.600	52.465
ລາຍຮັບດອກເບ້ຍ	4.986	-	4.986	

ຍອດຄົງເຫຼືອໃນວັນທີ 30 ກັນຍາ 2018 ແລະ 31 ທັນວາ 2017 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	30 ກັນຍາ 2018	31 ທັນວາ 2017	30 ກັນຍາ 2018	31 ທັນວາ 2017
		(ລ້ານກີບ)		
ເງິນຈ່າຍລ່ວງໜ້າສຳລັບຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ	6.272.246	4.398.656	6.272.246	4.398.656
ບໍລິສັດລູກ				
ບໍລິສັດ ນ້ຳບີ ພາວເວີ້ ຈຳກັດ	-	-	455.471	363.668
ບໍລິສັດ ອີດີເອ-ເຈັນ ໂຊ່ລ່າ ພາວເວີ ຈຳກັດ	-	-	346.061	301.295
	6.272.246	**4.398.656**	**7.073.778**	**5.063.619**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ບົດອະທິບາຍຊ້ອນທ້າຍປະກອບເອກະສານລາຍງານການເງິນລະຫວ່າງປີແບບສະຫຼຸບຫຍໍ້
ສຳລັບຮອບເວລາລາຍງານສາມເດືອນ ສິ້ນສຸດ ວັນທີ 30 ກັນຍາ 2018 (ກ່ອນກວດສອບ)

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	30 ກັນຍາ 2018	31 ທັນວາ 2017	30 ກັນຍາ 2018	31 ທັນວາ 2017
		(ລ້ານກີບ)		
ເງິນກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ	357.210	463.392	357.210	463.392
ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ	964.913	144.312	952.658	138.970
ບໍລິສັດລູກ				
ບໍລິສັດ ນ້ຳປີ ພາວເວີ ຈຳກັດ	-	-	488	488
ບໍລິສັດ ຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ຜ-ຟຟລ ຈຳກັດ	-	-	61	-
ພາກສ່ວນທີ່ກ່ຽວຂ້ອງອື່ນໆ				
ບໍລິສັດ ໄຟຟ້າ ນ້ຳລີກ 1-2 ຈຳກັດ	15.309	-	15.309	-
ບໍລິສັດ ໄຟຟ້າ ເຫີນຫີນບຸນ ຈຳກັດ	57.698	-	57.698	-
ລວມ	**1.037.920**	**144.312**	**1.026.214**	**139.458**
ເງິນກູ້ຍືມໄລຍະຍາວ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ				
- ເງິນກູ້ຍືມໄລຍະສັ້ນ	456.849	442.848	456.849	442.848
- ເງິນກູ້ຍືມໄລຍະຍາວ	3.530.067	3.710.946	3.530.067	3.710.946
ລວມ	**3.986.916**	**4.153.794**	**3.986.916**	**4.153.794**

13 ເຫດການທີ່ເກີດຂຶ້ນພາຍຫຼັງວັນທີ່ລາຍງານ

ໃນວັນທີ 9 ຕຸລາ 2018, ບໍລິສັດໄດ້ເພີ່ມເງິນລົງທຶນໃນບໍລິສັດ ຫ້ວຍລຳພັນຕອນລຸ່ມ ເປັນບໍລິສັດຮຸ້ນສ່ວນ ທີ່ດຳເນີນ ທຸລະກິດໃນ ສປປ ລາວ, ເປັນຈຳນວນທັງໝົດ 0,12 ລ້ານໂດລາ ຫຼື ທຽບເທົ່າ 1.024 ລ້ານກີບ. ບໍລິສັດຍັງຮັກສາ ສ່ວນ ໄດ້ເສຍໃນບໍລິສັດຮຸ້ນສ່ວນຄືເກົ່າ.

ໃນວັນທີ 24 ຕຸລາ 2018, ບໍລິສັດໄດ້ເພີ່ມເງິນລົງທຶນໃນບໍລິສັດ ໄຟຟ້ານ້ຳພຸນ ຈຳກັດ, ເປັນບໍລິສັດຮຸ້ນສ່ວນ ທີ່ດຳເນີນ ທຸລະກິດໃນ ສປປ ລາວ, ເປັນຈຳນວນທັງໝົດ 0,10 ລ້ານໂດລາ ຫຼື ທຽບເທົ່າ 853 ລ້ານກີບ. ບໍລິສັດຍັງຮັກສາ ສ່ວນໄດ້ ເສຍໃນບໍລິສັດຮຸ້ນສ່ວນຄືເກົ່າ.

ผู้อำนวยการใหญ่

ລັດຕະນາ ປະທຸມວັນ

/หัวหน้าพะแนกบันชี

ຄຳຫວາງ ສີສົມຫວັງ

หัวหน้าพะแนกกวดสอบพายใน